# ປັດໃຈພື້ນຖານໂດຍສັງເຂບ

## ການຮຽນເທດແບບຫຼິ້ນສຽງ ແລະ ກອນເທດແຫຼ່



**ພ.ສ 2545 ຄ.ສ 2002**

**ບຸນເຕີນ ສີບຸນເຮືອງ**

# ຄຳອະນຸໂມທະນາ

= = = = = = 000 = = = = = =

ຜູ້ຂ້າອາຈານ ບຸນເຕີມ ສີບຸນເຮືອງ ຮອງຜູ້ອຳນວຍການ ວິທະຍາໄລສົງອົງຕື້ ທີວໜ້າໄຄງ ການວາລະສານ ແລະ ຫ້ອງສະໝຸດຄອບຄົວເພື່ອພັດທະນາການອ່ານຊຸມຊົນ.ກິດຈະກຳການຮຽນສົນລະທຳແລະ ວັດທະນະທຳ ສາຂາວິທະຍາໄລສົງອົງຕື້ ດ້ານວິຊາການປະຈຳບ້ານປາກທ້າງ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ.

ຂໍອະນຸໂມທະນາສ່ວນບຸນສ່ວນກຸສົນນຳນາງເຮືອງທີ່ໄດ້ບໍລິຈາກປັດໄຈ ຊຸກຍູ້ການພິມປຶ້ມໂຕທຳ,ທັມມະ,ວັດທະນະທຳ ຮີດສິບສອງ ຄອງສິບສີ່ ແລະ ອັດແຜ່ນ ຊີດີສູ່ຂັວນ, ເທດພຣະເວດ(ມະຫາ ແລະ ບົດຮຽນເທດ) ເພື່ອເປັນຄູ່ມືໃຫ້ແກ່ການຮຽນການສອນຂອງພຣະສົງສາມະເນນ ແລະ ລູກຫຼານຊາຍ- ຍິງ ຈຳນວນ 100 ກວ່າ ອົງ-ຄົນ.

ຂໍໃຫ້ບຸນກຸສົນສ່ວນນີ້ ຈົ່ງເປັນພະລະວະປັດໄຈ ຄ້ຳຊູຍູ້ໜູນເຈົ້າສັດທາ(ນາງເຮືອງພ້ອມດ້ວຍລູກ ທ້າວນະລົງ ພິມມະສອນ,
ທ້າວ ສີລະວົງ ພິມມະສອນ ຈົ່ງມີແຕ່ຄວາມສຸກຄວາມຈະເລີນ ປາດສະຈາກທຸກໂສກໂລກໄພໄຂ້ເຈັບ ປະກອບໄປດ້ວຍ ລາບຊັບສິນສົມບັດຍົດ ສົມລະເສີນ ແລະ ມີຄວາມສຸກ).

ຂໍອຸທິດສ່ວນບຸນກຸສົນນີ້ໄປເຖິງດວງວິນຍານ ທ້າວບຸນເຮົ່ງພິມມະສອນ ຜູ້ເປັນຜົວຂອງນາງເຮືອງ, ພໍ່ເຖົ້າຫງຽນຮິວຢາຍ, ພໍ່ເຖົ້າເຈືອງວັນເຖາະ, ພໍ່ເຖົ້າພອນ ພິມມະສອນ, ພໍ່ເຖົ້າສອນ ພິມມະສອນ ຕະຫຼອດເຖິງເຈົ້າກຳ ນາຍເວນ ຈົ່ງໄດ້ຮັບສ່ວນບຸນກຸສົນນີ້.ຖ້າຕົກທຸກຂໍໃຫ້ພົ້ນຈາກທຸກ ຖ້າໄດ້ສຸກແລ້ວຂໍໃຫ້ສຸກຍິ່ງໆຂຶ້ນໄປຕາບຕໍ່ເທົ້າເຂົ້າສູ່ພະນິບພານກໍ່ຂ້າເທີ້ນ.ຂໍອະນຸໂມທະນາ.

ອ.ຈ ບຸນເຕີມ ສີບຸນເຮືອງ.

# ພິທີ

# ເຊີນພຣະເຫວດ
# ທີ່ວັດຂຸນຕາວະຣາຣາມ



ປີ ພ. ສ. 2545

ຄ.ສ 2002

# ປັດໃຈພື້ນຖານໂດຍ
# ສັງເຂບການຮຽນເທດແບບທົ້ນສຽງ ແລະ ກອນ
# ເທດແຫລ່

## ຄະນະຊີ້ນຳ ແລະ ກວດແກ້

1. ພຣະອາຈານ ໃຫຍ່ ມະຫາ ບົວຄຳ ສາລີບຸດ ຜ.ອ ວິທະຍາໄລສົງ
2. ພຣະອາຈານໃຫຍ່ ມະຫາເວດ ມະເສໄນ ຮອງ ຜ.ອ ຝ່າຍກິດຈະກຳນັກສຶກ ວິທະຍາໄລສົງອົງຕື້
3. ພຣະອາຈານໄກສອນ ຫົວໜ້າຫ້ອງວິຊາການ
4. ທ່ານອາຈານຈັນທອນ ເທບຄໍາວົງ ຮອງ ຜ.ອ ຝ່າຍວິຊາການ
5. ທ່ານ ອາຈານ ສົມເພັດ ຈິດທິວົງ ຮອງ ຜ.ອ ຝ່າຍບໍລິຫານ.
6. ທ່ານ ອາຈານ ອ່ອນສີ ປະຊາວົງ ນັກວິຊາການ, ກົມວັດທະນະທຳມະຫາຊົນ ກະຊວງກະແຫຼງຂ່າວ ແລະ ວັດທະນະທຳ.

## ໜ່ວຍເຕັກນິກ ຈັດທຳ-ຄອມພິວເຕີ

ອາຈານ ນາງ ຣັດຕະນະພອນ ບານຸວົງສ

ຈັດພິມໂດຍ

ວິທະຍາໄລສົງ ອົງຕື້ ວຽງຈັນ
ພິມທີ່ໂຮງພິມ ສີບຸນເຮືອງ
ຕາມ ທ.ບ 49/ພຈ23012003.
ຂະໜາດ . 14.5 ຊມ x 20.5 ຊມ
ພິມເທື່ອທີ່ໜຶ່ງ ຈຳນວນ 2.000 ຫົວ
( ສະຫງວນລິຂະສິດ )

## ແກ້ຄຳຜິດ

| ໜ້າ | ແຖວ | ຄຳຜິດ | ຄຳຖືກ |
|---|---|---|---|
| 4 | 8 | ໄຫວຄູ | ໄຫວ້ຄູ |
| 4 | 14 | ເຊື່ອໃນວ່າ | ເຊື່ອໃຈວ່າ |
| 9 | 11 | ພ້ອມທັງພົງຜົເຊື້ອ | ພ້ອມທັງພົງເຜົ່າເຊື້ອ |
| 9 | 11 | ປະຊາຊາດຊາວລາວ | ເປັນພ້ອມທັງພົງເຜົ່າ |
| 14 | 7 | ບັນນີ້ | ບັດນີ້ |
| 17 | 1 | ນະມະກາຣາບຸພາເວນະນ້ອມ | ເປັນພໍ່ |
| 22 | 15 | ງານຍ້ອງ | ເປັນງານຍ້ອງ |
| 30 | 16 | ປຽບດັ່ງຄຳສາວົກ | ເປັນຄຳສາວົກ |

# ສາລະບານ


| ລ/ດ | ຊື່ເລື່ອງ | ໜ້າ |
|---|---|---|
| 1. | ຄຳນຳ | V |
| 2. | ຄຳເຫັນຂອງຮອງ ຜ ອ ຝ່າຍວິຊາການ | VIII |
| 3. | ບົດທີ່ 1 ຫຼັກການ ແລະ ການປະຕິບັດກ່ຽວກັບການເທດ | 1 |
| 4. | ບົດທີ່ 2 ສິ່ງທີ່ຄວນເອົາໃຈໃສ່ໃນການຮຽນເທດ | 2 |
| 5. | ບົດທີ່ 3 ຄຸນສົມບັດຂອງຜູ້ຮຽນເທດ | 4 |
| 6. | ກອນແຫລ່ ໄວ້ອາໄລວິຣະກຳກ້ຳປົວຊຽງຂວາງ | 7 |
| 7. | ກອນແຫລ່ ອວຍພອນຜູ້ມາທານ | 11 |
| 8. | ກອນແຫລ່ ພຣະສິທາດອອກບວດ | 12 |
| 9. | ກອນແຫລ່ ອວຍພອນທົ່ວໄປ | 17 |
| 10. | ກອນແຫລ່ ອວຍພອນຜູ້ເກົ້າ | 17 |
| 11. | ກອນແຫລ່ ລາຫໍທໍາມາດ | 20 |
| 12. | ກອນແຫລ່ ລາຫໍທໍາມາດອີກແບບນຶ່ງ | 23 |
| 13. | ກອນແຫລ່ ໂມທະນາທານ | 27 |
| 14. | ກອນແຫລ່ ຄຸນພຣະທາດຫລວງ | 30 |
| 15. | ຄຳຂອບໃຈ | 33 |
| 16. | ລາຍນາມຜູ້ອຸບປະກັມການຈັດພິມປຶ້ມ | 35 |

## ຄຳນຳ

ວິຊາພາສາລາວ ແລະ ວິຊາວາທະສາດເປັນວິຊາທີ່ມີຄວາມສຳຄັນຫລາຍ ໂດຍສະເພາະໄວຍະກອນລາວພາກທີ່ສີ່ວ່າດ້ວຍສັນທະກະວີ ຊຶ່ງມີເນື້ອໃນເນັ້ນໄປທາງການແຕ່ງ ( ຂຽນ ). ອ່ານ ແລະ ເວົ້າ. ສະນັ້ນ ການສອນໃນວິທະຍາໄລສົງຄະນະອຳນວຍການຈຶ່ງໄດ້ເອົາໃຈໃສ່ຊີ້ນຳ ການສອນທາງພາກທິດສະດີ ແລະ ຕົວຈິງ ໄປ ພ້ອມໆກັນ, ເນັ້ນໜັກການເທດບັບແຕ່ເທດທຳມະດາ ຈົນ ຮອດການເທດແບບຫລື້ນສຽງ ໃນຈັງຫວະທຳນອງຕ່າງໆ.ສ່ວນໃຫຍ່ໃນໜັງສືລຳມະຫາຊາດ ( ພຣະເຫວດສັນດອນ)ການເທດຫລື້ນສຽງອີງໃສ່ທາງດ້ານພອນສະຫວັນ ແລະ ພອນສະແຫວງຊຸ້ມສຽງບວກກັບຄວາມດຸໝັ່ນ ຝຶກແອບເປັນບັນຫາສຳຄັນ.

ສະນັ້ນ, ການສອນໃນໂຮງຮຽນ ເວລາຂອງການຝຶກແອບມີໜ້ອຍ ຈຶ່ງມີນັກສຶກສາສົງຫລາຍອົງ ທີ່ມີຄວາມສົນໃຈໃນແຕ່ລະວັດ ເຊັ່ນ: ວັດຊຸມຕາວະຣາຮາມ, ວັດສີສົມຊື່ນຕົ້ນຕະກຸນ, ວັດໜອງບົວທອງເໜືອ-ໃຕ້ ວັດທົ່ງສ້າງນາງ, ວັດທົ່ງຕ້ອນ, ວັດໂພນຕ້ອງ, ວັດສີສະເກດ, ວັດເມືອງວາ ແລະ ວັດອື່ນໆ... ໄດ້ເຊີນໄປສອນກັບທີ່. ເມື່ອເວລາສອນຜູ້ຂ້າມີແຕ່ແນະນຳ ກັບປາກ ແລະ ເທດ ໃຫ້ຟັງແຕ່ບໍ່ໄດ້ຂຽນທິດສະດີເປັນປຶ້ມໃຫ້ເປັນຄູ່ມື. ຍ້ອນແຮງຜັກດັນ ແລະ ຄວາມຮຽກຮ້ອງ ຕ້ອງການດັ່ງກ່າວ ຈຶ່ງເຮັດໃຫ້ຜູ້ຂ້າຂຽນຂັດຈ້ອນ ໂດຍສັງເຂບທິດດີການຮຽນເທດແບບຫຼິ້ນສຽງ ແລະ ຂຽນກອນແຫຼ່ ຈັດພິມເປັນປຶ້ມນ້ອຍໆ ເພື່ອເປັນຄູ່ມືແກ່ນັກສຶກສາສົງ ແລະ ຜູ້ສົນໃຈທົ່ວໄປ.ເມື່ອເວົ້າເຖິງເທດຫຼິ້ນສຽງ ແລະ ເທດແຫຼ່ ກໍ່ມີຄົນສົນໃຈໃນຄຳວ່າເທດແຫຼ່ ແມ່ນຫຍັງ?

ສະນັ້ນ, ຈຶ່ງມີຄູບາອາຈານຜູ້ຫລັກຜູ້ໃຫຍ່ໃຫ້ຂໍ້ມູນທີ່ມີຄວາມໝາຍຂ້າງຄຽງ ແລະ ຄືກັນເຊັ່ນ:

1. ແດ່ ອັນນີ້ແມ່ນເອົາໃຫ້, ມອບໃຫ້, ສົ່ງໃຫ້.

ຕົວຢ່າງ: " ຂໍອວຍພອນແດ່ທ່ານ "

2. ແລ່ ອັນນີ້ແມ່ນລັກສະນະການປາດ ອອກເປັນຊິ້ນເປັນຕອນ.ຕົວຢ່າງ: " ເອົາມີດແລ່ຊີ້ນ "

3. ຄຳວ່າ ເທດ ແມ່ນການສະແດງອອກເລື້ອງໃດ ເລື້ອງນຶ່ງ ທີ່ມີຈັງຫວະທຳມະດາ ແລະ ຫຼີ້ນສຽງ.

- ແບບທຳມະດາ ໝາຍເຖິງການເທດ ໄປທຳມະດາຕາມເລື້ອງ ແຕ່ບໍ່ໄດ້ຫຼີ້ນສຽງ

- ແບບຫລິ້ນສຽງ ແມ່ນການເທດທີ່ຂ້ອນຂ້າງຍາກແດ່ໜ້ອຍນຶ່ງ ເພາະມັນຕ້ອງໃຊ້ສຽງ, ກົດສຽງໄປຕາມຈັງຫວະທຳນອງໃຊ້ອາລົມຈິດຄ້ອຍຕາມເນື້ອໃນຂອງບົດ ໃຫ້ມີຣົດຊາດຄື : ຄວາມມ່ວນ, ອອນຊອນ ຕາມລົດທັງ 9 ໃນວັນນະຄະດີລາວຄື:

1. ລົດແຫ່ງຄວາມຮັກ
1. ລົດແຫ່ງຄວາມຊັງ ຄວາມໜ່າຍ
2. ລົດແຫ່ງຄວາມມ່ວນຊື່ນ
3. ລົດແຫ່ງຄວາມກະຣຸນາ
4. ລົດແຫ່ງຄວາມຄຽດ
5. ລົດແຫ່ງຄວາມພຽນ
6. ລົດແຫ່ງຄວາມຢ້ານ ຫຼື ທຸກ
7. ລົດແຫ່ງຄວາມປະຫລາດໃຈ
8. ລົດແຫ່ງຄວາມສະຫງົບ

4. ຄຳວ່າແຫຼ່ ຫລື ເທດແຫຼ່ ແມ່ນພາກ ຂະຫຍາຍຄວາມມ່ວນຊື່ນ

ສ່ວນຫລາຍການເທດແຫຼ່ ເພິ່ນນິຍົມໃຊ້ເທດໃນເວລາເທດມະຫາຊາດຈົບແລ້ວສຸດທ້າຍມີການສະຫຼຸບດ້ວຍການເທດ ແຫຼ່ອວຍພອນ, ລ້າງທ້າທັນມາດ ຫຼື ແຫຼ່ ຄືນຕອນໃດຕອນໜຶ່ງທີ່ຮູ້ສຶກວ່າມ່ວນຫຼາຍ. ຈາກນັ້ນການເທດແຫຼ່ຈຶ່ງຂະຫຍາຍອອກໄປຢ່າງກ້ວາງຂວາງ. ສະນັ້ນເພື່ອໃຫ້ໜັງສືນັ້ນມ່ວນຂຶ້ນຕື່ມ ມີຕະຫລົກ, ໂສກເສົ້າ,ມ່ວນຊື່ນ ນັກປາດ ອາຈານບາງທ່ານ ຈຶ່ງຕື່ມບາງກ້ອຍຄຳສຳນວນ ເຂົ້າອີກເອີ້ນວ່າ: " ສອຍ ຫລື ສ້ອຍ " ບາງສະບັບໃນໜັງສືລຳມະຫາຊາດ ຈຶ່ງບໍ່ຄືກັນເຊັ່ນ: ບາງມະທີໃຫ້ຫາລູກ ບ່ອນໃດກໍ່ຫາໝົດຍັງແຕ່ໃນສະໂບກຂາຣະນີ ມີຕອນ

ຫນຶ່ງວ່າ: " ຫລອນວ່າໄດ້ຢ່າ( ຢຽບ ) ແກ້ວແມ່ກໍ່ຄ່ອຍຄ່ຳໄປຄ່ຳມາ" ແຕ່ບາງພູກກໍ່ບໍ່ມີ.

ສະນັ້ນການເທດແບບຫລິ້ນສຽງມາເຖິງປັດຈຸບັນນີ້ນັກເທດເກົ່າໆ ກໍ່ເກົ່າກໍ່ຕາຍໄປຕາມກົດເກນຂອງສັງຂານ ບາງກໍ່ສິກອອກໄປສູ່ຄາຣະວາດ ທີ່ເຫລືອກໍ່ມີຫນ້ອຍ ແຕ່ຫາກວ່າທຳນອງ, ຈັງຫວະການເທດແບບຫລິ້ນສຽງ ຍັງເປັນທີ່ນິຍົມກັນໃນສັງຄົມໂດຍສະເພາະປາງບຸນພຣະເຫວດປະຈຳປີ.

ດັ່ງນັ້ນ, ຈຶ່ງໄດ້ຈັດພິມປຶ້ມດັ່ງກ່າວຂື້ນມາ ເພື່ອຈຸດປະສົງ ດັ່ງນີ້:

1. ເພື່ອອະນຸລັກຮັກສາທຳນອງເທດ ແບບບູຮານທີ່ມ່ວນອອນຊອນນີ້ໄວ້
2. ເພື່ອເປັນການຟື້ນຟູວັດທະນະທັມອັນດີງາມນີ້ໄວ້ ຈະເປັນຈັງຫວະທຳນອງໃດກໍ່ຕາມ
3. ເພື່ອໃຫ້ໂອກາດແກ່ພຣະລູກແນນຫລານ ແລະ ຜູ້ສົນໃຈໄດ້ມີບົດຮຽນໄປຝຶກແອບເທດຕອບສະຫນອງສັດທາຍາດໂຍມ ເປັນການສ້າງບັນຍາກາດໃນປາງບຸນຕ່າງໆ ແມ່ນວ່າປຶ້ມນ້ອຍໆ ຫົວນີ້ ຊິຍັງບໍ່ທັນຄົບກ້ວນດ້ານເນື້ອໃນ ແຕ່ຫນ້ອຍບໍ່ຫລາຍຄືຈະເປັນບົດຮຽນ ແລະຄູ່ມືແກ່ຜູ້ທີ່ແອບເທດເບື້ອງຕົ້ນ. ມີບ່ອນໃດຂາດຕົກບົກພ່ອງ ຂໍຄວາມກະຣຸນານຳຄູບາອາຈານ ແລະ ທ່ານຜູ້ຮູ້ທັງຫລາຍ ຈົ່ງໄດ້ຊ່ວຍຕໍ່ເຕີມແກ້ໄຂໃຫ້ສົມບູນ ຂໍຂອບພະຄຸນເປັນຢ່າງສູງມານະທີ່ນີ້ດ້ວຍ.

ວິທະຍາໄລສົງອົງຕື້, ວຽງຈັນ.

*ວັນທີ່ 28 /12 / 2002*

*ບຸນເຕີມ ສີບຸນເຮືອງ*

*ອາຈານສອນປະຈຳວິທະຍາໄລສົງອົງຕື້, ວຽງຈັນ.*

ห้ามจำหน่าย

# ຄຳເຫັນຂອງຮອງ ພອ ຝ່າຍວິຊາການ

ອາຈານບຸນເຕີນ ສີບຸນເຮືອງ ເປັນອາຈານສອນວິຊາພາສາລາວທີ່ມີຄວາມຊຳນານພໍສົມຄວນໃນວິທະຍາໄລສົງອົງຕື້ ໂດຍສະເພາະແລ້ວ ການເທສະໜາແບບທຶ້ນສຽງໃນລຳມະຫາຊາດ ເຊັ່ນ: ມະທີ, ສັກກະຕິ, ນະຄອນ, ແລະການເທດແຫຼ່ຕ່າງໆ ເພາະຜ່ານມາຜູ້ກ່ຽວກໍ່ມີປະສົບການ ການເທສະໜາຕ່າງໆ ສະໄໝເປັນພຣະສົງທັງເປັນພຣະນັກເທດ ທີ່ມີພອນສະຫວັນ, ພອນສະແຫວງ ດີພໍສົມຄວນ.

ມາເຖິງປະຈຸບັນນີ້, ການເທ ສະໜາ ແບບສາຣະພັນຍະເທດ ຫຼື ການເທດທຶ້ນສຽງ, ຍັງນິຍົມກັນເທດໃນງານບຸນຕ່າງໆ.ສ້າງຄວາມມ່ວນຊື່ນ ແລະ ມີບັນຍາກາດດີ ໃນງານບຸນຕອບສະໜອງສັດທາຂອງຍາດໂຍມຜູ້ມາຟັງ ທັງນີ້ກໍ່ເພາະວ່າ: ການເທດສະໜາ ມີຫລາຍຈັງຫວະທຳນອງ ຂອງແຕ່ລະທ້ອງຖິ່ນ ສຳຄັນວ່າ ເທດໃຫ້ມ່ວນ ກົງການ ທີ່ຄະ ຣັດ ສະການອອກສຽງຈະແຈ້ງ ຢາກເຮັດໃຫ້ໄດ້ ແນວນັ້ນ ມັນຕ້ອງມີການຝຶກແອບ ມີທັກສະໃນການອ່ານຢ່າງດີ.

ສະນັ້ນ, ອາຈານ ບຸນເຕີນ ສີບຸນເຮືອງ ໄດ້ຄົ້ນຄິດແຕ່ງປື້ມນີ້ຂື້ນເພື່ອເປັນຄູ່ມືແກ້ນັກສຶກສາວິທີຍາໄລສົງ ແລະຜູ້ທີ່ສົນໃຈ ນັບວ່າ: ເປັນແນວທາງແກ້ໄຂ ແລະຕອບສະໜອງໄດ້ ຄວາມຕ້ອງການຂອງພະສົງສາມະເນນ ນັກສຶກສາ ແລະ ຜູ້ອື່ນໆ ບໍ່ຫຼາຍກໍ່ໜ້ອຍ. ເປັນທີ່ແນ່ນອນວ່າ: ມີຫຼາຍອັນ ອາດບໍ່ຄົບກ້ວນສົມບູນດີ ແຕ່ກໍ່ເປັນຄູ່ມື ຂັ້ນພື້ນການແກ່ຜູ້ ເລີ້ມຝຶກແອບ ເພື່ອກ້າວໄປເຖິງການເປັນນັກເທດທີ່ດີໃນອະນາຄົດ. ຂໍຂອບໃຈອາຈານ ບຸນເຕີນ ສີບຸນເຮືອງ ທີ່ໄດ້ອຸທິດຕົນເພື່ອວຽກງານດັ່ງກ່າວນີ້ ຢ່າງສຸດໃຈ.

ຈັນທອນ ເທບຄຳວົງ

# ບົດທີ 1
# ຫຼັກການ ແລະ ການປະຕິບັດ
# ກ່ຽວກັບການເທດ

## 1. ຄວາມໝາຍ:

ແມ່ນໝາຍເຖິງການເປັ່ງສຽງ ອອກມາຈາກລຳຄໍ ເພື່ອໃຫ້ມີນ້ຳສຽງແລະຈັ່ງຫວະຂອງການເທດ.

ເມື່ອເທດຕໍ່ໜ້າຜູ້ຟັງສ່ວນຫຼາຍ, ຜູ້ເທດຈະຕ້ອງໃຊ້ສີໜ້າທ່າທາງ ແລະ ການເຄື່ອນໄຫວ ສ່ວນຕ່າງໆ ຂອງຮ່າງກາຍ ປະກອບການເທດ ຈະເຮັດໃຫ້ຜູ້ຟັງ ເຂົ້າໃຈ ແລະ ຮູ້ສຶກມ່ວນ ມີມະໂນພາບ ດຶງດູດຄວາມສົນໃຈ.

## 2. ການເທດມີ 2 ປະເພດ:

2.1. ນັກເທດແບບທັມມະວັດເສນາ

2.2 .ນັກເທດແບບສາລະພັນຍະເທດ

ໃນທີ່ນີ້ ຈະເນັ້ນໜັກ ໃສ່ການເທດ ແບບສາລະພັນຍະເທດ.

- ສະໄໝບູຮານເພິ່ນນິຍົມເທດ ມີຫຼາຍຈັ່ງຫວະລີລາຕ່າງໆ ເຊັ່ນ:

ມ້າລຽບຄ້ າຍ, ກະຕ່າຍກົກແຮ້ວ, ແຫຼວລອດຟ້າ, ສາລິກາລ່ອງລົມ, ລົມພັດໃພ່, ນ້ຳຕ້ອງໄຄ້, ກາເຕັ້ນກ້ອນ ແລະອື່ນໆ.

- ການເທດແບບສາລະພັນຍະເທດ: ແມ່ນເທດເປັນເລື່ອງທີ່ໜັກໄປໃນທຳນອງໃຊ້ສຽງ ແລະ ມີທຳນອງຂອງແຕ່ລະທ້ອງຖິ່ນເຊັ່ນ: ພາກໃຕ້ຈຳປາສັກ-ສະຫວັນນະເຂດ ພາກກາງກຳແພງນະຄອນວຽງຈັນ ແຂວງວຽງຈັນໃຊ້ສຳນຽງແບບງຶ່ມທ່າ-ງຶ່ມທົ່ງ

- ພາກເໜືອສຸດຄື: ແຂວງຜົ້ງສາລີ, ແຂວງບໍ່ແກ້ວ, ແຂວງຫຼວງນ້ຳທາ ແລະແຂວງອື່ນໆກໍ່ໃຊ້ສຳນວນຕາມທ້ອງຖິ່ນຂອງຕົນ.

ທຳນອງອາດບໍ່ເໝືອນກັນແຕ່ເນື້ອຄວາມອັນດຽວກັນ ສ່ວນຫຼາຍນັກເທດລຳພະເຫວດສັນດອນ.

## 3. ຈຸດປະສົງ

ການເທດຍ່ອມມີເປົ້າໝາຍວ່າ ຈະເອົາອັນໃດໃຫ້ແກ່ຜູ້ຟັງຄື:

ຄວາມເຂົ້າໃຈ, ຟັງແຈ້ງ, ມ່ວນອ່ອນຊອນ, ຄ້ອຍຕາມ, ມີອາລົມຈິດ, ມີນະໂນພາບ, ມີຄວາມສຸກ, ມີວິມຸດຢາກໃຫ້ເກີດວິມຸດ ຜູ້ເທດຕ້ອງເອົາຈິງເອົາຈັງ ແລະ ຈິງໃຈໃຊ້ທຸກຄວາມສາມາດ.

## 4. ແບບຝຶກຫັດເປັນນັກເທດ

4.1 ຝຶກແອບທ່ອງເທດສຳນວນຂອງຜູ້ມີປະສົບການມາແລ້ວ ເປັນຕົວ ນຳຝຶກເທດແຕ່ຜູ້ດຽວ ແລ້ວຄ່ອຍເທດຕໍ່ໜ້າໝູ່ເພື່ອນ.

4.2 ຈື່ຈຳສຳນວນເດີມຂອງຄູອາຈານເປັນບາດກ້າວທຳອິດ

4.3 ການອອກສຽງເປັນກ້ອຍຄຳ, ສຽງບໍ່ກ້ວມຄຳ

4.4 ບໍ່ຄວນຄິດທຳນອງເອົາເອງ ເພາະເຮົາບໍ່ທັນຊຽວຊານ ເມື່ອເຮົາຊຽວຊານ ແລ້ວ ແລ້ວຈຶ່ງຄ່ອຍຮູ້ນຳໃຊ້ ທຳນອງຕ່າງໆ ເພື່ອປະສົມປະສານກັນ ຮູ້ກຳນົດ ຄວາມດັງ ເບົາ ໜັກຂອງສຽງ ແລະ ອື່ນ.

# ບົດທີ່ 2

# ສິ່ງທີ່ຄວນເອົາໃຈໃສ່ໃນການຮຽນເທດແບບຫຼີ້ນສຽງ

1. ການທີ່ຈະເປັນນັກເທດຈະແມ່ນເທດອັນໃດ ເລື່ອງໃດ ຢູ່ໃສກໍ່ຕາມນັກເທດຈະຕ້ອງມີປັດໃຈຢູ່ 3 ຢ່າງໃຫຍ່ຄື:

1. ປາກໄວ
2. ໃຈກ້າ
3. ໜ້າດ້ານ

1.1 ປາກໄວ: ໝາຍເຖິງມີທັກສະໃນການອ່ານໜັງສື ຫຼື ເທດໜັງສື ຢ່າງລ່ຽນໄຫຼ ຄ່ອງແຄ້ວ ບໍ່ເກີ້ຂິນ, ລ້ຳລາກ, ບໍ່ຊ້າ ບໍ່ໄວໃຫ້ເປັນທີ່ລຳຄານໃຈແກ່ຜູ້ຟັງ ນອກນັ້ນຍັງຮູ້ຈັກການອອກສຽງໃຫ້ຖືກຕາມທີ່ຄະ ຣັດສະ, ບໍ່ອຸນອຳ ແລະ ອື່ນໆ.

2.1ໃຈກ້າ: ໝາຍເຖິງການຝຶກແອບໃຫ້ມີຄວາມກ້າຫານສ້າງຄວາມເຊື່ອໝັ້ນແກ່ຕົນເອງ ມີຄວາມໜຸ່ນໜ່ຽງ ບໍ່ຫວັ່ນໄຫວ ຄອນແຄນ. ມີສະມາທິ

3.1ໜ້າດ້ານ: ໝາຍເຖິງການເຝິກຫັດຈາກໜ້ອຍຫາຫຼາຍ

ແອບເທດຕໍ່ໜ້າໝູ່ ເພື່ອໃຫ້ເກີດບໍ່ມີຄວາມອຽງອາຍ ຫຼົບຫຼີກຟ້າວຟັ່ງ ຟ້າວແລ້ວຟ້າວໄປ ກ້າສູ້ໜ້າກັບຄົນຟັງ ວາງທັດສະນະຄະຕິກຕ້ອງ ຍິ້ມແຍ້ມແຈ່ມໃສບໍ່ຫົດຫູ່ ແລະ ອື່ນໆ

## II ລັກສະນະການອອກສຽງ

- ການເທດສຽງຕ້ອງເລີ້ມຕົ້ນ ຈາກຕົ້ນສຽງທຳອິດອາດຈະຄ່ອຍ ແຮງຂຶ້ນຕາມລຳດັບພໍຄວນພ້ອມນີ້ກໍ່ມີການປະສານລະຫວ່າງສາມສຽງຄື:
- ສຽງໃຫຍ່
- ສຽງກາງ
- ສຽງສູງ ຫຼື ສຽງນ້ອຍ

## III ລັກສະນະການເທດ

- ການເທດຫຼິ້ນສຽງ ມີຄວາມແຕກຕ່າງຈາກການເທດທຳມະດາ ສະນັ້ນການຝຶກແອບ ລູກຄໍ ການເດີນຂອງຈັງຫວະສຽງຕາມໜັງສື ແລະ ການໃສ່ອາລົມຕາມເນື້ອໃນຂອງໜັງສື. ຈາກນັ້ນການເທດຫຼິ້ນສຽງນອກຈາກມີພອນສວັນແລ້ວຍັງຕ້ອງມີພອນສະແຫວງ ແລະ ມີສຽງດີ, ການເທດຫຼິ້ນບໍ່ພຽງແຕ່ໃຫ້ຜູ້ ຟັງມ່ວນ, ຍັງເຮັດໃຫ້ຜູ້ຟັງ ຟັງແຈ້ງ ເຂົ້າໃຈເນື້ອໃນ ຂອງໜັງສືໄດ້ອີກດ້ວຍ.
- ອັນສຳຄັນສຸດທ້າຍຄືເປັນຜູ້ມັກ ມີອາລົມ ມີຄວາມກະຕືລືລົ້ນຈິ່ງເທດໄດ້.

- *ຕົວຢ່າງຝຶກແອບການອອກສຽງ*
  - ກາໂກລາ ກາດຳ ແລະ ກາດ່ອນ ບິນໄປຈັບຕົ້ນທ່ອນ ແລ້ວຮ້ອງວ່າ ກາ ກາ ...
  - ກາໂກລາ ກາດຳ ແລະ ກາເຜືອກ ບິນໄປຈັບຕົ້ນເຊືອກ ແລ້ວຮ້ອງວ່າ ກາ ກາ ....
  - ກາໂກລາ ກາດຳ ແລະ ກາສິ້ວ ບິນໄປຈັບຕົ້ນງິ້ວ ແລ້ວຮ້ອງວ່າ ກາ ກາ ...

# ບົດທີ3

# ຄຸນສົມບັດຂອງຜູ້ຮຽນເທດ

ກ່ອນທີ່ຈະເປັນນັກເທດ ໄດ້ກໍ່ບໍ່ແມ່ນເລື່ອງທີ່ຈະງ່າຍດາຍປານໃດ. ຕ້ອງໄດ້ຜ່ານການຝຶກແອບ ຫຼາຍຫຼັບຫຼາຍຕ່າວ ທາງດ້ານການອອກສຽງ ລີລາທ່າທາງຕ່າງໆ ເພື່ອໃຫ້ເກີດມີອາຣົມມ່ວນຊື່ນ ຕະຫຼົກໂສກເສົ້າ ແລະ ສະມາທິ. ສະນັ້ນຢາກເປັນນັກເທດທີ່ດີ ມີຄວາມກ້າວໜ້າ ທັງເປັນທີ່ຍົກຍ້ອງຂອງຄູບາອາຈານໝູ່ຄູ່ເພື່ອນຝູງ ແລະ ອອກຕົນຍາດໂຍມ ນັກເທດຕ້ອງມີຄຸນສົມບັດດັ່ງນີ້:

## I. ມາລະຍາດໃນເວລາຂຶ້ນເທດ

ກ່ອນຂຶ້ນເທດ ..................ນັກເທດຕ້ອງຄາຣະວະພຣະຣັດຕະນະໄຕຣພຣະເຖຣະຜູ້ໃຫຍ່ ( ເອີ້ນວ່າໄຫວຄູ ) ຈາກນັ້ນກໍ່ທັກທາຍຍາດໂຍມໜ້ອຍນຶ່ງແລ້ວຈຶ່ງເທດຕໍ່ໄປ. ທັງນີ້ ກໍ່ເພື່ອສະແດງອອກເຊິ່ງມາລະຍາດນຸ່ມອ່ອນຫວານ ບໍ່ຖືຕົນ, ບໍ່ອວດອົ່ງທະນົງຕົນ ແລະ ອື່ນໆ.

ບັນຫາສຳຄັນອີກຢ່າງນຶ່ງ ຄືສ້າງຄ່ານິຍົມ ຂອງຕົນໃນສັງຄົມ ສາມາດດຶງດູດ ຊັກຈູງ ຈິດໃຈຄົນໄດ້ດີ.

## II. ມາລະຍາດໃນເວລາຝຶກເທດ

ນັກເທດຕ້ອງເຂົ້າໃນວ່າ ຈະແມ່ນເທດໃນເວທີ ຫຼື ບ່ອນໃດກໍ່ຕາມ ບໍ່ຄວນນອນເທດ, ນັກເທດຄວນ ນັ່ງ-ຢືນເທດ ເພາະວ່າບໍ່ມີເວທີໃດຈະມີນອນເທດ.

## III. ການຮັກສາສຽງ

1. ສິ່ງທີ່ຄວນຫຼີກເວັ້ນ

- ນ້ຳຫວານເກີນໄປ
- ສັນອາຫານຫຼາຍເກີນໄປ
- ບໍ່ສູບຢາ
- ບໍ່ຫິວນອນ

- ບໍ່ດື່ມນໍ້າເຢັນຫຼາຍ ແລະ ອື່ນໆ

2. ສິ່ງທີ່ຄວນປະຕິບັດ

- ດື່ມນໍ້າອຸ່ນ
- ສົ້ມນໍ້າສົ້ມ-ຫວານ
- ສົ້ມອາຫານພໍປະມານ

3. ສິ່ງຄວນເອົາໃຈໃສ່

- ໝັ່ນຝຶກແອບ
- ທ່ອງຈື່ມໜັງສືໃຫ້ໄດ້ກັບປາກຍິ່ງດີ
- ມີພຣະທູສູດ
- ໝັ່ນຟັງນັກເທດຜູ້ເພິ່ນມີປະສົບການແລ້ວ.

ການເທດແມ່ນການສະແດງ ເກືອງເລື່ອງໃດເລື່ອງນຶ່ງ ຫຼື ເທດການໃດນຶ່ງ ຈະໜ້ອຍ ຫຼື ຫລາຍ ແລ້ວແຕ່ເງື່ອນໄຂ ຜູ້ເທດເປັນຜູ້ກຳນົດ ເອົາ. ສະນັ້ນ ຖ້າຢາກໃຫ້ໄດ້ດີ ບັນຫາສຳຄັນອີກຢ່າງນຶ່ງ ກໍ່ຄືເປັນຜູ້ມີສະມາທິ ບໍ່ຫວັ່ນໄຫວຄອນແຄນ ຄິດນັ້ນຄິດນີ້ສະທົກສະທ້ານ ຫຼື ວ່າມີຄວາມເຢີ້ຍິ່ງອວດໂຕ ແລະ ອື່ນໆ.

ໃນເວລາເທດຕ້ອງຮູ້ຈັກກຳນົດ ໂຕເອງຄືຮູ້ຈັກ ຟັງໂຕເອງໄປນຳການໃຊ້ສຽງ, ຈັງຫວະທຳນອງ ແລະ ອາຣົມຈິດ. ເວົ້າລວມແລ້ວ ເວລາເທດຕ້ອງສວມວິນຍານ ຂອງຕົນໃສ່ບົດເທດ ສະແດງອາຣົມຕາມບົດເພື່ອໃຫ້ ຜູ້ຟັງໄດ້ຊີມລົດຊອງບົດເທດ ທີ່ຕົນກຳລັງເທດຢູ່. ຫຼີກເວັ້ນການເທດທີ່ມີລັກສະນະແຫ້ງແລ້ງບໍ່ມີລົດຊາດ ທັງກາຍ ເປັນຄວາມລຳຄານແກ່ຜູ້ຟັງ ກາຍເປັນການເທດ ການຟັງພໍແລ້ວຮີດແລ້ວຄອງໄປ ບາງອົງເທດມ່ວນແຕ່ທາງສຽງຟັງບໍ່ແຈ້ງ ບາງອົງອາດຟັງແຈ້ງສຽງບໍ່ມ່ວນປານໃດກໍ່ມີ ຄວາມຈິງແລ້ວດີທີ່ສຸດຄວນໃຫ້ໄດ້ທັງສອງຢ່າງເທດແຈ້ງຄົມຊັດ ສຽງມ່ວນກົກຈັງຫວະທຳນອງ ແລະ ຫຼັກການອອກສຽງ

## V. <u>ການຝຶກລູກຄໍ</u>

ນັກເທດບາງອົງ ເພິ່ນນິຍົມຝຶກລູກຄໍ ຄື : ມຸດລົງນໍ້າແລ້ວຮ້ອງເອົາເຊືອກຜູກນໍ້າມັນໝູກືນລົງຄໍແລ້ວດຶງ ອອກມາ ກິນ-ອົມຂີ້ງທົ່ວກະທຽມ ແລະ ອື່ນໆ. ຕາມຄວາມເຂົ້າໃຈຄືເຮັດໃຫ້ຄໍແຕກ ກາຍເປັນສຽງນວນ ເວລາອັນຫຼືປະ

ສານສຽງກໍ່ງ່າຍວ່າຈັ່ງຊັ້ນແລ້ວ. ອັນນັ້ນກໍ່ປະຕິເສດບໍ່ໄດ້ແຕ່ຢ່າງໃດກໍ່ຕາມ ການທີ່ເຮັດໃຫ້ເຮົາເຮດໄດ້ດີນັ້ນ ກໍ່ຄືຄວາມດຸໝັ່ນ ອົດທົນໃນການແອບຝຶກການເຮັດແນວນີ້ ບໍ່ພຽງແຕ່ເຮັດໃຫ້ມີລູກຄໍດີ ຍັງເຮັດໃຫ້ເທສະໜາລ່ຽນໄຫຼ ແລະ ຈື່ຈໍາໄດ້ດີອີກ. ການຝຶກລູກຄໍຕ້ອງຝຶກໂຕທີ່ມັນຍາກນັ້ນຫຼາຍໆ ເຊັ່ນ:

- ສິນວນໆ
- ອະນຸໂມທະນາ
- ຢາດໆ...
- ເອີ້ຍ....
- ເທວະຕາໂຍ ແລະ ອື່ນໆ

ການຂຶ້ນສຽງລົງສຽງມີສອງຈັ່ງຫວະຄື: ຂຶ້ນໂດຍປ່ອຍສຽງຍາວທໍາມະດາ ແລະ ຂຶ້ນສຽງດ້ວຍວິທີອັນລູກຄໍ ຕາມສຽງຕໍ່າ-ສູງ ໜັກ-ເບົາແລະອື່ນໆ.

ປະການສຸດທ້າຍການເທດຫຼັ້ນສຽງ ເພື່ອໃຫ້ອັ່ນລູກຄໍ ( ໃຫ້ຫຼິ້ນສຽງໄດ້ດີຕ້ອງຈື່ໜັງສື ຫຼື ອ່ານໜັງສືລ່ຽນໄຫຼທີ່ສຸດ. ເພາະມັນຈະເຮັດໃຫ້ເຮົາໄດ້ຫຼິ້ນສຽງຕາມໃຈ ໂດຍບໍ່ຄິດເກີງຢ້ານຄາໜັງສື.

( ໝົດ )

# *ກອນແຕ່*
# *ໄວ້ອາໄລວິຣະກຳກ້ຳປົວທີ່ແຂວງຊຽງຂວາງ*

*ຊາຍດອນໃຕ້*

<table>
<tr><td>ບັດນີ້ ຈັກໄດ້ພັນລະນາເລື່ອງ</td><td>ວິຣະກຳປະຫວັດສາດ</td></tr>
<tr><td>ໃຫ້ແກ່ຍາດພີ່ນ້ອງ</td><td>ຟັງແຈ້ງຄູ່ສູ່ຄົນ</td></tr>
<tr><td>ຕັ້ງແຕ່ ຄາວກ່ອນພຸ້ນ</td><td>ບ້ານເມືອງຂຸ່ນມົວໝອງ</td></tr>
<tr><td>ພວກຈອງຫອງພິມານ</td><td>ແຕ່ກັບເຂົ້າມາປົ້ນ</td></tr>
<tr><td>ສະພາບການວາຍວຸ້ນ</td><td>ເມືອງລາວແຕ່ຄັ້ງກ່ອນ</td></tr>
<tr><td>ຕັ້ງແຕ່ເໜືອຮອດໃຕ້</td><td>ເປັນໄຟກຸ້ມກໍ່ກວມ</td></tr>
<tr><td>ປະຊາຊົນໄດ້ຕໍ່ສູ້</td><td>ຄວາມຮັກຊາດສູງສັກ</td></tr>
<tr><td>ໃຕ້ການນຳພາຂອງພັກ</td><td>ບໍ່ອ່ອນຍອມພໍ່ໜ້ອຍ</td></tr>
<tr><td>ສາມັກຄີໂຮມເຕົ້າ</td><td>ເປັນໃຈດຽວກ້ຽວກ່ອມ</td></tr>
<tr><td>ພ້ອມໃຈກັນຕໍ່ສູ້</td><td>ບໍ່ຖອຍລ້າອ່ອນຍອມ</td></tr>
<tr><td>ແຂວງຊຽງຂວາງກໍ່ພ້ອມ</td><td>ກຳລັງແຫ່ງສາມັກຄີ</td></tr>
<tr><td>ເລື່ອງຕ່ອຍຕີພິມານ</td><td>ຊ່າລືດັງກ້ອງ</td></tr>
<tr><td>ທັງກອງຫຼອນທະຫານພ້ອມ</td><td>ປະສານກັນກ້ອງສະໜັ່ນ</td></tr>
<tr><td>ກຳລັງໄຟເພດຍິງໃນຄັ້ງນັ້ນ</td><td>ເປັນເຈົ້າຢູ່ສະໜາມ</td></tr>
<tr><td>ທຸກພາກສ່ວນບໍ່ໄດ້ຂ້າມ</td><td>ໜີ່ຜ່າຍສະພາຍກົງ</td></tr>
<tr><td>ທັ່ງພຣະສົງສາມະເນນ</td><td>ກໍ່ຮ່ວມໃຈເປັນກ້ອນ</td></tr>
<tr><td>ນອນຊຸມຄອງຢູ່ໃນກ້ຳ</td><td>ກໍ່ກຳປືນຕ້ານຕໍ່</td></tr>
<tr><td>ອັນນີ້ແລ້ວເດີ້ພໍ່</td><td>ນ້ຳໃນນັກຕໍ່ສູ້ບໍ່ມີ</td></tr>
<tr><td></td><td>ຢ້ານຢ່ອນຂາມ</td></tr>
</table>

ຄວາມຮັກຊາດບໍ່ຜ່າຍຂ້າມ ຫາກຕິດຈອດໃນຫົວໃຈ

<table>
<tr><td>ເໝືອນດັ່ງໄຟລຸກລາມ</td><td>ໝື່ນກີກອງຮ້າ</td></tr>
<tr><td>ປຽບດັ່ງຄືກັບເຜີ້ງ</td><td>ຫວງຮັງບໍ່ປະປ່ອຍ</td></tr>
</table>

ຕິດຕໍ່ກັນກ່ອນກ້ຽວ    ສະເໝີເພີ້ງປ່ຽງດຽວ
ເກີງພິມານຊີສອດສ້ຽວ    ໃຊ້ຍິນເອີ້ນເວຫາ
ຈູດວັດວາເຮືອນຊານ    ປາບປາມທຳລາຍມ້າງ
ມ້າງແຕ່ເຮືອນຊານໄດ້    ແຕ່ຫົວໃຈບໍ່ມ້າງມຸ້ນ
ຄວາມຮັກຊາດທະວີຄູນ    ໃນເລື່ອງການຕໍ່ສູ້
ບໍ່ມີຢ້ານຢ່ອນຂາມ

ລະເບີດດັງຕຸ້ມຕ້າມ    ຕິດຕໍ່ບໍ່ມີຢຸດ
ແຕ່ວ່າຢຸດຫົວໃຈ    ຝ່າຍເຮົາບໍ່ມີໄດ້
ຕັດສິນໃຈຫານກ້າ    ຍິງສັດຕູໂຕຕອບ
ຄວາມຮອບຄອບຄັ້ງນັ້ນ    ຈຶ່ງຂັບທ້າໃສ່ໝູ່ມານ
ເອີ ! ໃຜກໍ່ບໍ່ສະທ້ານ    ຢຸດຢ່ອນຍອມຈຳນົນ
ເກີດເປັນຄົນມີແຜ່ນດິນ    ຊື່ວ່າລາວລືກ້ອງ
ຄົນຊຽງຂວາງເຂົາຍ້ອງ    ວ່າເປັນຄົນກ້າເກັ່ງ
ເລື່ອງຜູ້ຍິງຢ່າໄປເສັງ    ຄວາມກ້າຫານອອກໜ້າກໍ່ພໍດ້ານດັ່ງຜູ້ຊາຍ
ໄດ້ເຫັນຄວາມໂຫດຮ້າຍ    ພິມານກໍ່ຮາວີ
ເໝືອນດັ່ງມີໄຟເຜົາ    ຈູດໃຈບໍ່ຫາຍຮ້ອນ
ນອນບໍ່ເຕັມຕາໄດ້    ໝາກຫົວໃຈຮ້ອນວີ່ງ
ຄວາວຮັກຊາດຮັກບ້ານເກີດເມືອງນອນ    ເປັນຫຼັກການຍຶດຖື

ຄືກຳລັງຕໍ່ສູ້    ເອົາໄຊກ້າວແນ່ນອນ
ສະພາບເກີດເດືອດຮ້ອນ    ເປັນໄຟຊຸບຫົວໃຈ
ເໝືອນດັ່ງມີໜາມປັກ    ສຽບຄາງຄາເນື້ອ
ລືບບໍ່ສູນເສຍໄດ້    ມັນຕິດຕາຄາຢູ່
ຄິດຮອດປູ່ຢ່າເກົ້າ    ທັງເດັກນ້ອຍກະພ້ອງກັນ
ທັງແມ່ຍິງອີກນັ້ນ    ທີ່ຮວມຢູ່ນຳກັນ
ລ້ວນແຕ່ມໍຣະນັງຕາຍ    ພາບດຽວເໝີດກ້ຽງ
ຫຼາຍຄອບຄົວສູນສ້ຽງ    ບໍ່ເຫຼືອເລີຍຜູ້ສືບຕໍ່

ອັນນີ້ແລ້ວເດີພໍ່ ໂສກນາດຕະກຳ
ຢູ່ຖ້ຳປິວຄັ້ງນັ້ນ ເປັນໜ້າເວດທະນາ
ສີ່ຮ້ອຍຄົນໄດ້ສິ້ນ ຊີວິດເວລາດຽວ
ລູກສອນໄຟເຂົາຍິງ ເມື່ອປາງສົງຄາມນັ້ນ
ບໍ່ອາດພົບລະນາໄດ້ ໃນຫົວໃຈມັນແຄ້ນຄັ່ງ
ກະທັ້ງເດັກອ່ອນນ້ອຍ ກໍຕາຍພ້ອມພໍ່ກັນ
ອັນວ່າເດັກພວກນີ້ ບໍ່ຮູ້ຮ່ອມດຽງສາ
ແຕ່ພວກມັນກະທຳລົງ ຍິ່ງກວ່າຜີໂພງເປົ້າ
ພາບແຫ່ງຄວາມສູນເສົ້າ ສະກົດໃຈບໍ່ຈາງຈືດ
ຍັງຝັງໃນພີ່ນ້ອງ ຊຽງຂວາງໄວ້ສູ່ຄົນ
ພ້ອມທັງພົງເຜົ່າເຊື້ອ ປະຊາຊາດຊາວລາວ
ລະນຶກເຖິງບໍ່ມີລືມ ເຫດການປາງນັ້ນ
ວັນນີ້ເຮົາຈຶ່ງພາກັນສ້າງ ກະທຳບຸນແກ່ພວກທ່ານ
ຂໍໃຫ້ດວງວິນຍານ ຈົ່ງສະກົດທີ່ພຸ້ນວິມານກ້ວາງຂວ່າງສະຫວັນ
ຂໍໃຫ້ໄດ້ຮັບຮູ້ ວ່າຊຸມຍາດພົງພັນ
ອົງການນຳຂອງພັກ ລັດຖະບານພຽງພ້ອມ
ລະນຶກເຖິງບໍ່ລືມໄດ້ ໃນຄວາມດີຂອງທ່ານ
ດ້ວຍຈິດໃຈກະຕັນຍູກະຕະເວທີ ຂໍຝາກໃຫ້ຊຸມເຈົ້າແດ່ທຸກຄົນ
ຂໍໃຫ້ທ່ານໄດ້ພົ້ນ ການຢູ່ໃນສົງສານ
ສຸກສຳລານສຸຄະຕິ ເປັນທີ່ໄປເນົາຍັ້ງ
ພວກຂ້າຂໍວອນເວົ້າ ອຸທິດບຸນແດ່ພວກທ່ານ
ຂໍໃຫ້ດວງວິຍານ ທ່ານຈົ່ງໄດ້ຮັບຮູ້ໃຫ້ບຸນຄ້ຳແດ່ທຸກຄົນ
ດ້ວຍກຸສົນທີ່ໄດ້ສ້າງ ໃຫ້ເປັນສິ່ງປັດໃຈ
ໄປຄ້ຳຊູໄປເຖິງ ທີ່ສຸຂະວະດີພົ້ນ
ຢ່າໄດ້ລົງມາໃຕ້ ວັດຕະວົນເບື້ອງຕ່ຳ
ຄຳຜູ້ຂ້າຂໍຝາກໃຫ້ ໃນໃຈນ້ອມລະນຶກຄຸນ
ວ່າສາທຸສາທຸສາທຸເດີ ຂໍໃຫ້ວິນຍານເຈົ້າທັງຫຼາຍນ້ອງພີ່

24/VII
ຫ້າມຈຳໜ່າຍ

ມາຮັບບຸນມື້ນີ້ ໃຫ້ພຽງພ້ອມຄູ່ສູ່ຄົນ
ຄັນຕົກທຸກໃຫ້ເຈົ້າພົ້ນ ເກີດທີ່ມີຄວາມສຸກ
ຄັນທາງກມີຄວາມສຸກ ໃຫ້ຍິ່ງສູງທະວີກ້າວ
ອັນວ່າພົງພັນເຊື້ອ ຜູ້ຍັງຊົງຊີວິດຢູ່
ຂໍສືບການຕໍ່ສູ້ ມູນເຊື້ອຕໍ່ໄປ
ເປັນແບບຢ່າງທີ່ໄດ້ ກ້າວແກ່ນຄົນແຂງ
ເປັນແວ່ນແຍງເຍືອງຍົກ ຕໍ່ໄປພາຍຊ້ອຍ
ນັບແຕ່ຊຸມເດັກນ້ອຍ ເຖິງໄວເຖົ້າແກ່
ເສຍສະຫລະຊີບເຊື້ອ ເພື່ອເມືອງບ້ານແຫ່ງຕົນ
ດ້ວຍພຣະຄຸນເລີດລົ້ນ ທຸກພາກສ່ວນສາທຸຊົນ
ອົງການນຳຂອງພັກ ລັດຖະບານໄດ້ຈັດຕັ້ງ
ມາໃນງານວັນນີ້ ໃຫ້ສຸກຂີເລີດຍິ່ງ
ບໍ່ວ່າຊາຍຫລືຍິງ ຂໍໃຫ້ສົມມາດແມ້ງມະໂນນ້ອມລະນຶກໝາຍ
ຢ່າໄດ້ພົບເຫດຮ້າຍ ແນວຊົ່ວປາປັງ
ອົງພຸດໂທໃຫ້ມາບັງ ແກ່ນພຣະທັມນຳຄຸ້ມ
ຄຸນພຣະສົງໃຫ້ມາຫຸ້ມ ເປັນກຳແພງແໜ້ນແກ່ນ
ສິ່ງສັກສິດໃນທົ່ວແຄວ້ນ ໃຫ້ປົກປ້ອງຊ່ວຍຊູ
ທັງກຸສົນຊ່ວຍຍູ້ ຂໍຈົ່ງຢູ່ກະເສີມສຸກ
ຢ່າມີມານມາຮຸກຮານ ກໍ່ກວນເມືອງບ້ານ
ເຣັດການງານມີຜົນໄດ້ ສີວິໄລກວ່າແຕ່ເກົ່າ
ຄວາມອັບປີ ແລະ ອັບເສົາ ຢ່າໄດ້ມາດ່ອນເຂົ້າຈົ່ງໄລເວັ້ນຕ່າງໜີ
ທຸກຄົນມາໃນງານມື້ນີ້ ໃຫ້ມີແຕ່ສົມຫວັງ
ລາບຍົດສັນລະເສີນສຸກ ແດ່ທຸກຄົນສົມແມ້ງ
ການສ້າງແປງເມືອງບ້ານ ມີສົມພານເຮືອງຮຸ່ງ
ຊຸມພໍ່ສຸງແມ່ປ້າ ສັດທາເຈົ້າຄູ່ສູ່ຄົນ
ປັ້ນລະນາ........................ ສັດທາໂຍມ....ເອີຍໆ.

( ຫມົດ )

# <u>ກອນແຫລ່</u>

## ອວຍພອນຜູ້ມາທານ

ຊາຍດອນໃຕ້

ບັດນີ້ ທ່ານຜູ້ມາທານໃຫ້     ດ້ວຍປັດໃຈບໍ່ລືຈາກ
ຫາກເຊືອລົງແນ່ແລ້ວ     ມະນີແກ້ວກໍ່ບໍ່ປານ
ຕັ້ງໃຈອອກຈາກບ້ານ     ນຶກວ່າຊິມາທານ
ມາທຳການກຸສົນ     ແຕ່ງບຸນເອົາໄວ້
ເປັນບັນໃດໄປພາຍໜ້າ     ຊາດຊິມາໃຫ້ມູນມັ່ງ
ດ້ວຍກຸສົນໃນຄັ້ງນີ້     ໄປນຳກຸ້ມກໍ່ກອມ
ລວມໝົດຍາດພີ່ນ້ອງ     ທຸກພາກສ່ວນມາໃນງານ
ສ້າງກອງການກຸສົນ     ແຕ່ລະຄົນມາໂຮມເຕົ້າ
ບາງຄົນມາທານເຂົ້າ     ໂພຊະນັງຕົກແຕ່ງ
ມີທັງຕົ້ມ ແລະ ແກງ     ກໍ່ຫາກຫລາຍມາກລົ້ນ
    ອາຫານພ້ອມຄູ່ສູ່ອັນ

ບາງຄົນນັ້ນກໍ່ໄດ້     ມວນໝູ່ພົນພະຫລາ
ພ້ອມກັນຈັດຫາມາ     ແຕ່ງພາພູນລົ້ນ
ມີໝາກຈອງໝາກຄາຍພ້ອມ     ນາວການກ້ຽງເວີ່
ມີຂອງຫວານແລະສົ້ມ     ຂະໜົມພ້ອມຄູ່ສູ່ແນວ
ຍັງບໍ່ແລ້ວທໍ່ນັ້ນ     ມີທັງຊໍ່ດວງມາລາ
ພ້ອມກັນມາຊອນແຊມ     ຊື່ນຊົມຫອມກຸ້ມ
ທ່ານມາທານວັນນີ້     ໃຫ້ມີບຸນມາຫຸ້ມຮໍ່
ອານິສົງກໍ່ເກື້ອ     ກວມເກົ້າຄູ່ສູ່ຄົນ
ຂໍໃຫ້ເຈົ້າລອດພົ້ນ     ສັບພະທຸກທັງປວງ
ຢ່າມີມານມາຂວາງ     ປ່ອງທາງທ່ຽວດັ້ນ
ຈົ່ງພາກັນສະໜຸກສ້າງ     ກຸສົນພົນບຸນທຸກເຊົ້າຄ່ຳ
ຢ່າມີຄຳເດືອດຮ້ອນ     ເງິນເຈົ້າອັ່ງກະເປົາ

ຄັນເຈົ້າ ມີລູກເຕົ້າ
ໄດ້ເພິ່ງຄຸນທັງໝົດ
ສັບພັນຍູເຍືອງໄຕ້
ໃຫ້ເຈົ້າສຸກເລີງໆ
ອາຍຸທຸກທ່ານນັ້ນ
ວັນນະໃສແພວພາວ
ສຸກກະເສີມສຳລານດ້ວຍ
ພະລະເຈົ້າໃຫ້ກຳລັງ
ແທ້ລະນາ............

ໃຫ້ປະເສີດມີບຸນ
ໜໍ່ໂພທິຍານກ້ວາງ
ນາໂກເປັນທີ່ເພິ່ງ
ສົມພານບຸນແກ່ກ້າສະເໜີເທົ່າທົ່ວກັນ
ໃຫ້ສົມດັ່ງໃຈໝາຍ
ດັ່ງດາວວະດຶງຟ້າ
ໂຊຄາເຫີນຫ່າງ
ຄວາມເຂັ້ມແຂງແກ່ນກ້າສັດທາເຈົ້າວ່າສູ່ຄົນ
ສັດທາໂຍມເອີຍງ

( ຫມົດ )

## ກອນແຫລ່
## ພຣະສິທາດອອກບວດ

### ຊາຍດອນໃຕ້

ບັດນີ້ ຟັງຍິນລົມພະຫລຽງໄມ້
ນໍ້າຫມອກລິນຢາດຍ້ອຍ
ດວງຈັນແຈ່ມທ້ອງຟ້າ
ດວງພຣະໄທມົວຫມອງ
ເປັນຄືດັ່ງໄຫມຫຍຸ້ງ
ເຊືອກຜູກຄໍ
ປອກສຸບຕີນຮັດອິ້ງຕິ້ງ
ແຕ່ວ່າດ້ວຍເດດກ້າ
ສັບພັນຍູເຍືອງແສງ
ເຫັນແກ່ໂລກາກ້ວາງ
ແສນຊິມົວມືດກຸ້ມ
ດ້ວຍກຸສົນເດດກ້າ

ໃບບາງເປື້ອງປິ່ນ
ລົງໃຕ້ຊຸ່ມຂີ້ດິນ
ດວງດາວເປັ່ງແສງໃສ
ດັ່ງເຮືອຄາແກ້ງ
ບໍ່ເຫັນເລີຍຊິຊອກເງື່ອນ
ປົ້ຜູ້ສອກ
ຊີຕັ້ງໄດ້ບ່ອນຈັ່ງໃດ
ຍອດຍິ່ງໂພທິຍານ
ສ່ອງຍານໄປໜ້າ
ເມືອງຄົນມະນຸດໂລກ
ຕັນໜ້າສ່ອງບໍ່ເຫັນ
ທຸກຢ່າງກໍ່ເລີຍຕັດ

ດວງພຣະໄທຮິງຮັດ  ມັດກໍ່ນາຍມືນແຈ້ງ
ສາມຕັບທາໄດ້ໄຂຊີ້  ຄືກຸນແຈໄດ້ເປີດປ່ອງ
ພຣະສິທາດສ່ອງເບິ່ງໜ້າ  ເມຍແກ້ວຍອດສະເໜ
ກັບທັງລູກນ້ອຍໆ  ຫລ້າອ່ອນກຸມມານ
ລາຫຸບນອນກິນນົມ  ຢູ່ນໍາມານດາເຈົ້າ
ນາງສະໜົມມາເຝົ້າ  ກໍ່ນອນເສີຍທັງຕົກໝື່ນ
ບາງຄົນເລີກສິ້ນຂຶ້ນ  ຈໍາກົ້ນກະຜ່ອງມີ
ບາງຄົນຄວ່າງພຸ້ນພີ້  ຂາກ່າຍເກາະກັນ
ບາງຄົນນອນຊົ້ນຂາ  ບໍ່ຫ່ວງຫຍັງພໍດີ້
ປະຕູສວນບໍ່ອັດມ້ຽນ  ປະຕູເຮືອນບໍ່ອັດຮີ່
ສະພາບເກີດແບບນີ້  ເປັນຫນ້າເບື່ອລະອາ
ພຣະສິທາດມຸ້ງໜ້າ  ໄປຫາບ່ອນນາຍສັນ
ກ້ຽມມ້າກັນກະກະ  ໃຫ້ດ່ວນເລວພະລັນຟ້າວ
ທຸກຢ່າງຕຽມດີແລ້ວ  ອາຊະໄນຮີບເລັ່ງ
ທະຍານຂ້າມປ່າໄມ້  ທັງນໍ້າແມ່ກະແສ
ຈົນວ່າໄປຮອດກໍ້າ  ແມ່ນໍ້າໃຫ່ຽເນລັນຊອນ
ຫລືເນລັນຊະລາ  ທີ່ພຣະອົງໝາຍມຸ້ງ
ແລ້ວຈຶ່ງຈັບພຣະຂັນຂຶ້ນ  ໄວວາຕັດເກດ
ແລ້ວຈຶ່ງຊົງນຸ່ງຜ້າ  ຈີວອນເອ້ໂອບໂຕ
ພຣະຈຶ່ງໄຂພຣະໂອດຕ້ານ  ຈາຕໍ່ນາຍສັນ
ເຈົ້າຈົ່ງຫວນຄືນກັບ  ສູ່ນະຄອນເມືອງກ້ວາງ
ກັບທັງກັນກະກະມ້າ  ອາຊະໄນທີ່ເຄີຍຂີ່
ດຽວນີ້ຈົ່ງຮັບຮູ້  ວ່າເຮົາສ້າງສືບສິນ
ຊົງຜະນວດຂາດສິ້ນ  ຄາຣະວາດຄອງເຮືອນ
ເຈົ້າຈົ່ງໄປທູນສານ  ພໍ່ພຣະຍາທາງບ້ານ
ກັບມະເຫສີແກ້ວ  ພິມພາແລະລູກອ່ອນເຮົາພຸ້ນ
ເຈົ້າຢ່າໄດ້ໂສກເສົ້າ  ກະສັນໂອ້ວ່າອ່ອນໃຈນາຍສັນເອີ່ຍ

ເມື່ອນັ້ນພຣະບາດເຈົ້າ ໄດ້ຕັ້ງຕໍ່ບໍາເພັນຕົນ
ຕາມແນວທາງ ຫນໍ່ໂພທິຍານເຈົ້າ
ເດັດດ່ຽວເອົາພຣະໄທສູ້ ຈິດກະສັນແສນວິເວກ
ສະມະກະທ່ຽງຫມັ້ນ ບໍ່ພັນປີ້ນປ່ຽນແປງ
ເພື່ອຊອກຄົນໃຫ້ຮູ້ແຈ້ງ ສັດຈະແທ່ງຄອງທັມ
ເພື່ອວ່າເອົາຕົນຫລຸດ ວິມຸດຄວາມຫລຸດພົ້ນ
- ບັນນີ້ ຍ້ອນລັດຕັດຕອນເຊົ້າ ບັນຍາຍກອນເທດແຫລ່
ຟັງເອົາເດີ້ໂຍມແມ່ ຟັງເອົາເດີ້ໂຍມພໍ່
ພຣະສິທາດຕັດສະຣູ້ໄດ້ແລ້ວ ພຣະທັມແຈ້ງສ່ອງໃສ່
ອະຣິຍະປະເສີດໄດ້ ຍິ່ງກ່ວາມວນມະນຸດ
ໄດ້ເປັນຄູຂອງຄົນ ແລະເທວະດາດ້າວ
ພຣະອົງເບົາພຣະໄທແທ້ ກະແສທັມກ້າແກ່
ໂພທິຍານທ່ຽງແທ້ ມານຮ້າຍຜ່າຍຫນີ
ອະຣະຫັງບອກຊີ້ ຕັດກິເລດບໍ່ມີເຫລືອ
ສາດສະດາສໍາມາ ເລີດຄົນທັງຄ້າຍ
ເທ ສະຫນາສອນຊີ້ ໃນຄວາມຈິງພົບແລະເຫດ
ພຸດໂທໂລເກອຸບປັນໂນ ເກີດຂື້ນແລ້ວ
ຣັດຕະນັງສາມຫນ່ວຍແກ້ວ ຈິ່ງແວວເຫລື້ອມແມ່ນສ່ອງໃສ

ສັດທາໂຍມ....ເອີ່ຍ.....ໆ

## ຕອນພຣະນາງພິມພາໃຫ້ຫາຜົວ

- ບັດນີ້ຈັກກ່າວເຖິງພິມພາຫຼ້າ ແສນໂສກາເສົ້າໂສກ ແມ່ເອີ່ຍ
ຕົກເມື່ອຄາວວິໂຍກຮ້າຍ ຜົວແກ້ວໄດ້ຫ່າງຫນີ
ນາງບໍ່ຮູ້ເມື່ອຊ້ຳ ຕອນຜົວຈາກຫນີໄປ
ນັບແຕ່ໃນຣາຕຣີ ທີ່ບັນທົມນອນປີ້ງ

ພໍ່ເມື່ອມືນຕາຂຶ້ນ ຍາມອາລຸນເປັນມື້ໃໝ່
ບໍ່ເຫັນພຣະແກ່ນໄທ້ ພຣະນາງໄຫ້ຮ່ຳຫາ
ພວກເສນາໃນຫ້ອງ ບໍ່ມີໃຜຮູ້ເມື່ອ
ໃຜກໍ່ນອນມິດມ້ອຍ ຄຳນ້ອຍກໍ່ບໍ່ມີ
ສຽງການກັບພູ້ນພີ້ ຢາກຮູ້ຂ່າວເປັນແຊວໆ
ແນວບໍ່ມີໃຜເຫັນ ເມື່ອພຣະອົງລົງຫ້ອງ
ພາສາດທອງມີສຽງໄຫ້ ເປັນແຊວ ໆ ພິດສະນັ່ນ
ຈົນວ່າດັງຮອດໄທ້ ບິດາເຫງົ້າພໍ່ພຣະອົງ
ຈິດກະສັບເພືອດພົ້ງ ອົງເອກມະຫາຈັກ
ພຣະສຸດໂທທະນະຕົກພຣະພັກ ຂະນ່າງໃຈພຣະໄທຮ້ອນ
ໄດ້ຍິນພິມພາໄຫ້ ຫາພົວຢູ່ອີ່ວອນ ໆ
ພຣະພີ່ເອີຍ !!! ສັ່ງມາຫນີຕອນນ້ອງນອນ
ຄັນຊິໄປແທ້ໆ ຄືບໍ່ເອີ້ນສັ່ງຄວາມ
ພໍ່ໃຫ້ນ້ອງຮັບຮູ້ ທຸກສິ່ງໃນຫົວໃຈ
ຄຽດອັນໃດບໍ່ເຄີຍຈາ ພຣະໂອດໄຂແຂເອື້ອນ
ຈິ່ງເອົາຕີນຫນີໄກຂ້າງ ປະນາງໄປກັບລູກອ່ອນ
ບໍ່ອາທອນດີ້ໆ ແນວນີ້ກະຊ້າງເປັນ
ໂອ້ພີ່ເອີຍ! ຕີວ່າພິມພານ້ອງ ໂສມບໍ່ງາມຮູບບໍ່ຄ່ອງ
ຫລືຫາກຕີວ່ານ້ອງແນວໃດແທ້ ບໍ່ຂາວສານ
ນ້ອງບໍ່ເຄີຍລະກົ້ມ ຮີດຄອງແຕ່ງກະສັດ
ນ້ອງບໍ່ເຄີຍລືມໄລ ຮີດຄອງຄູນເຄົ້າ
ປະຕິບັດພົວໃຫ້ ມາດີໂດຍຕະຫລອດ
ສຽງນາງອອດໆ ເວົ້າ ນ້ຳຕາຍ້ອຍຍ່າວໄຫລ
ສຽງນັບນອງໃນຫ້ອງ ນາງທອງພິດສະນັ່ນ
ພໍ່ປານຈັກກະຈັ່ນຮ້ອງ ເດືອນຫ້າກະບໍ່ປານ
ຈົນວ່າຮູ້ຂ່າວຕ້ານ ນາຍສັນຕ່າວມາເກິງ
ໄດ້ກາບທູນເຫໂວ ສູ່ປະການທັງສິ້ນ

ຫົວໃຈນາງພໍແດດິ້ນ　　ໄດ້ຍິນຄຳນາຍສັນກ່າວ
ນ້ຳຕາໄຫຼຍາວຍ້ອຍ　　ຍິນສະອື້ນຢູ່ບໍ່ເຊົາພິມພາເອີຍ
- ເອີ້! ບັດນີ້ຕັດຕອນເຊົາ　　ພຣະໂຄດົມຊິແຈ້ງຂ່າວ
ບອກແກ່ນາງນາດນ້ອຍ　　ພິມພາຫຼ້າຈົ່ງຄ່ອຍຟັງ
ພິມພາເອີຍ !　　ເຈົ້າຢ່າໄດ້ໂສກເສົ້າແສນເວດທະນາໜັກ
ໂສກາເປັນຄວາມທຸກ　　ອັ່ງມະໂນໃນແຄ້ນ
ພີ່ບໍ່ຊິງຊັງນ້ອງ　　ແນວໃດຈັກຢ່າງ
ການທີ່ອ້າຍຈາກນ້ອງ　　ເພາະໃຈຕັ້ງຕໍ່ພະທັມ
ກໍເອົາການບຳເພັນສ້າງ　　ໂພທິຍານຍອດຍິ່ງ
ຊ່ວຍຊາວຊົນຊາດເຊື້ອ　　ເມືອງໃຕ້ມະນຸດຄົນ
ເພື່ອໃຫ້ຫລຸດລອດພົ້ນ　　ວັງກິເລດສົງສານ
ພຣະນິບພານເປັນແດນສຸດ　　ປະເສີດສູງເຫລືອລົ້ນ
ຂໍໃຫ້ໂມທະນານ້ອມ　　ການບຳເພັນຂອງພີ່
ຈັ່ງຊິເຫັນຍອດແກ້ວ　　ທາງຂື້ນສູ່ນິບພານ
ຍ້ອນດັ່ງນັ້ນຈຶ່ງຈາກນ້ອງ　　ຈົ່ງຄິດທີ່ຄຳຈາ
ການຈາກລາກັນໄປ　　ຢ່າຫວ່ງໃຫ່ຍອາໄລຮ້ອນ
ເມື່ອນັ້ນພິມພາໄຫວ້　　ລົງເທິງຝ່າພຣະບາດ
ຢ່ານິບານມາແລ່ນເຂັນ　　ຢ່ານິເວນມາແລ່ນຕ້ອງ
ພິມພານ້ອງ　　ໄດ້ກ່າວຈາ
ພຣະອົງໄຂພຣະໂອດເວົ້າ　　ຈາຕໍ່ພິມພາ
ຈົ່ງຕັ້ງໃຈປະຕິບັດ　　ເພື່ອການກຸສົນນີ້
ແລ້ວພິມພາຈະເຫັນແຈ້ງ　　ສັດຈະທັມທີ່ເຮົາກ່າວ
ຢຸດເລື່ອງລາວພຽງທໍ່ນີ້　　ທີ່ໜ້າຈົ່ງຄ່ອຍຟັງ

ສັດທາໂຍມ.....ເອີຍ......ງ

( ຫມົດ )

# ກອນແຫລ່
# ອວຍພອນທົ່ວໄປ

ຊາຍດອນໃຕ້

- ນະມະກາຣາບຸພາເວນະພ້ອມ ປະນົມກອນກອຍກ່າວ
ມະໂນໃນໜ່ວງບ້າວ ຄຸນແກ້ວລະນຶກຫາ
ເຈົ້າຫາກໃຈແກ່ກ້າ ລະນຶກຮອດພຣະໄຕຣຣັດ
ໄດ້ພາກັນຈັດຫາ ແຕ່ງທານດີແລ້ວ
ລະນຶກເຖິງຄຸນແກ້ວ ສາມປະການກົ້ມກາບ
ໂດຍສຸພາບຮຽບຮ້ອຍ ທາງຂ້ອຍຊິອວຍພອນ
ຢ່າໄດ້ທຸກຍາກຮ້ອນ ປະການສິ່ງສັນໃດ
ສັບພະໂພຍໄພຫຍັງ ໃຫ້ເສື່ອມສູນເສຍສິ້ນ
ຢູທ່າງກິນທານສ້າງ ທາງບຸນໄດ້ຈິດຈໍ່
ຂໍຢ່າໄດ້ພົບພໍ້ ມານຮ້າຍຜ່າຍໜີ
ເຈົ້າທໍາບຸນເທື່ອນີ້ ໃຫ້ມີແຕ່ຄວາມດີ
ຄວາມອັບປີຈັງໄຣ ຢ່າໃຫ້ເວີນມາໃກ້
ທັງຄວາມເຈັບຄວາມໄຂ້ ແນວບໍ່ດີໃຫ້ໜີຫ່າງ
ຢ່າໄດ້ມາຢູ່ຄ້າງ ຄາຂ້ອງໃຫ້ຂາດຄືງ
ຈິດສະຫງົບແນ່ນິ້ງ ປາດສະຈາກມວນມານ
ກະເສີມສານສົດໃສ ສ່ວນໃຈສະບາຍບ້າງ
ທາງສ່ວນກາຍສະເໝີດ້ວຍ ໂດຍດີສະດວກດັ່ງ
ຕົວຈິດຕັງ ກາຍັງ ໃຫ້ສົມຫວັງສູ່ດ້ານບໍ່ພານພໍ້ສິ່ງໃດ
ສັບພະໂຣກຢ່າໃກ້ ໄພໝູ່ມະຫາສານ
ກິເລດສາມານພິ ໃຫ້ຜ່າຍໜີເດີທ້ານ
ປັນຈະມານທັງຫ້າ ທັງໂຣຄາພະຍາດເກົ່າ
ຢ່າໄດ້ມາຢູ່ເຝົ້າ ນໍາເຈົ້າໃຫ້ຫ່າງຫາຍ
ສັບພະສິ່ງຮ້າຍ ໃຫ້ຫາຍຂາດກາຍາ

ພະຫລາບຸນນ່າຊູ ຢູ່ສູ່ຍາມເດີເຈົ້າ
ຢ່າໄດ້ມີທາງເສົ້າ ດວງພຣະໄທໃຫ້ສົດຊື່ນ
ບໍ່ວ່າວັນແລະຄືນ ຕະຫລອດເດີນຍ່າງຍ້າຍນອນເທິງນັ່ງສະບາຍ
ຄັນເຈົ້າຍົກຍ່າງຍ້າຍ ຍົວລະຍາດໄປໃສ
ຢ່າໄດ້ມີເວນໄພ ສິ່ງໃດມາຕ້ອງ
ສະໜຸກເບີ່ງໃນຫ້ອງ ເຄຫາຫາຍປ່ວຍ
ເປັນຄົນລ້ຳຄົນລວຍ ມີເງີນຄ່ຳອີກດ້ວຍສະໜຸກສ້າງແຕ່ງກີນ
ຄືໄປໝົດທຸກຊິ້ນ ສັບພະສ່ວນເຮືອນຊານ
ຊິທຳການຫຼືຂາຍຂອງ ທ່ອງທຽວເໜືອໃຕ້
ໄດ້ກຳໄລມີເງີນລ້ານ ໂດລາທັງເງີນບາດ
ເງີນກີບຢ່າຂາດບ້າງ ສົມພານເຈົ້າໃຫ້ໃຫຍ່ສູງ
ທຸກສິ່ງສົມມາດມຸ້ງ ຢ່າເຂີນຂາດເບົາບົກ
ຫວິດຈາກເຫວນາຣົກ ປ່ອງສະຫວັນໃຫ້ເປັນທ້າງ
ແນມເຫັນທາງທຽວຍ້າຍ ອັນຕະລາຍຢ່າມາຜ່າ
ຕົກຫວ່າງນີ້ຊິຂໍລາ ສັດທາໂຍມພີ່ນ້ອງ
ຊິລາແລ້ວແມ່ນສູ່ຄົນ ສັດທາໂຍມ...ເອີຍ

( ຫມົດ )

## ກອນແຫລ່
## ອວຍພອນຜູ້ເກົ້າ

### ຊາຍດອນໃຕ້

- ບັດນີ້ ສິບນີ້ວນົບນອບໄຫວ້ ພະໄທຈອດຈ່ຳຈິດ
ດວງກະແສແນວຄິດ ເປັນໜຶ່ງດຽວມະໂນນ້ອມ
ຫອມຮັກໃນຄຸນແກ້ວ ອາວຸໂສທຸກໆ ທ່ານ
ແຕ່ພຣະເດດສົມພານ ຈົນວ່າຮອດແກ່ເກົ້າຊາວບ້ານຫມູ່ຂະໂຍມ

ທ່ານໄດ້ອົດອ່ອມລ້ຽງ
ທັງບຸນຕີ
ເມດຕາທົ່ມຂາວແຈ້ງ
ໃຫຍ່ເປັນທ້າວເປັນນາງ
ບໍ່ມີໃຫ້ພະຍາດຕ້ອງ
ຫມາກຫົວໃຈຄະນຶງຮັກ
ແນວໃດດີເພິ່ນສອນໃຫ້
ເຖິງຍາມຫລັບຍາມນອນ
ຄວາມອົບອຸ່ນພໍ່ແມ່ເຈົ້າ
ຄິດຈົນໄວຊະລາເຖິງ
ຈາກຫນຸ່ມເປັນຄົນເຖົ້າ
ເລື່ອງຄວາມຮັກແມ່ບໍ່ວາງ

ຜູ້ເປັນຄູເພິ່ນບອກແຈ້ງ
ອາວຸໂສການນຳ
ຄວນທີ່ເຮົາຖະຫນອມໃຫ້
ລູກຮັກທັງສິດຮັກ

ບຸນຄຸນທ່ານເລີດລົ້ນ
ທ່ານໄດ້ເຄີຍອຸທິດ
ມີບົດຮຽນໃສແຈ້ງ
ປະສົບການແກ່ກ້າ
ຂໍອວຍພອນແດ່ເຈົ້າ
ທັງຄູບາອາຈານ
ເຖົ້າແກ່ໄວຊະລາແລ້ວ
ຂໍໃຫ້ບຸນສົມພານ

ລູກອ່ອນບຸດຕາ
ໃຫ້ໃຫຍ່ສູງຈະເລີກກ້າວ
ບໍ່ມີດ່າພ້ອຍດ່າງ
ນັບແຕ່ຄ່າເຂົ້າປ້ອນອາພອນຜ້າເຄື່ອງຂອງ
ສັບພະສິ່ງໂພຍໄພ
ແຕ່ລູກຕົນບໍ່ມີແລ້ວ
ບໍ່ຫນີໄກລູກອ່ອນ
ແມ່ກໍ່ຊົມກອດອຸ້ມເອົາຂື້ນໃສ່ເພິງ
ບໍ່ມີຈືດຈາງຈິດ
ແກ່ກາຍມາແລ້ວ
ແຕ່ຍັງແພງລູກບໍ່ຫ່າງ
ທັງພໍ່ຍັງກອດກ້ຽວ
ຫນຽວແຫນ້ນບໍ່ປ່ຽນແປງ
ທີ່ໄດ້ສັ່ງສິດສອນ
ລ້ວນແຕ່ມີຄຸນລົ້ນ
ກາຍໃຈທ່ານອົບອຸ່ນ
ທຸກກ້ອນຫນ້າ
ຫລາຍນ້ອຍຄູ່ສູ່ຄົນ
ເຖົ້າແກ່ອາວຸໂສ
ຕ່ວງການມາແລ້ວ
ຄວາມດີທຸກສິ່ງຢ່າງ
ຈຶ່ງສອນຊີ້ສັ່ງເຮົາ
ພໍ່ແມ່ທັງຫລາຍ
ທ່ານຜູ້ນຳເມືອງບ້ານ
ຊາຍຍິງທຸກ ໆ ທ່ານ
ຈົ່ງໄດ້ມາຊ່ວຍປ້ອງ
ສະຫລອງໃຫ້ແກ່ຄຸນ

ລູກຫລານຢ່າໄດ້ວຸ້ນ ໃຫ້ທ່ານມີຄວາມທຸກ
ສ້າງແຕ່ແນວມີຄວາມສຸກ ຢູ່ສະບາຍເບິງເບື້ອ
ເປັນຮົ່ມໂພເມືອງບ້ານ ປານະມີມຸງເຫລື່ອມ
ເປັນດັ່ງແກ້ວຫນ່ວຍເຫລື້ອມ ມະນີລ້ຳຄ່າຄູນ
ຂໍໃຫ້ບຸນທີ່ທ່ານສ້າງ ຈົ່ງມາຊ່ວຍປົກປັກ
ພິທັກເປັນກຳແພງ ຄູ່ສູ່ຄົນເດີ້ເຈົ້າ
ແຫ້ລະນາ... ສັດທາໂຍມ... ເອີຍ.ໆ ( ຫມົດ )

## ກອນແຫລ່
## ລາຫໍທັມມາດ
### ຊາຍດອນໃຕ້

\- ບັດນີ້ ພໍແຕ່ຈົບລົງແລ້ວ ເທສະໜາມະຫາຊາດ
ຊຸມຫມູ່ນັກປາດເຈົ້າ ໄດ້ຟັງແຈ້ງຄູ່ສູ່ຄົນ
ດ້ວຍຈິດໃຈປ່ຽມລົ້ນ ເຕັມແຕ່ການກຸສົນ
ດ້ວຍພົນບຸນມາຟັງທັມ ຮ່ຳຄະນຶງເຫັນຮູ້
ສັບພັນຍູເຍືອງໄຕ້ ໄຟປັນຍາແຈ້ງສະຫວ່າງ
ໄປຕາມທາງພຣະເຈົ້າຊີ້ ເພິ່ນລົງໃຊ້ຊາດພຣະອົງ
ມີເສັ້ນໂງເສັ້ນໂຄ້ງ ເສັ້ນຊື່ຫລືທາງລັດ
ມາຕັດຮອນລົງໃນ ພຣະເຫວດສັນດອນເຈົ້າ
ກີ່ເອົາທານະໄມໃຫ້ ໃນທະສະສິບຊາດ
ບໍ່ໄດ້ຂາດແບບເບື້ອງ ຄອງເຄົ້າຊາດພຣະອົງ
ຈິດໃຈສູງສົ່ງພົ້ນ ລົ້ນຍິ່ງເຫລືອປະມານ
ນັບແຕ່ທ່ານມາເຄີຍ ຢູ່ເມືອງປາງນັ້ນ
ທານະຂັນພັດທານມ້າ ອານະໄນບໍ່ໄດ້ກີ່
ຮາຊະຣົດທີ່ເຄີຍຂີ່ ກໍ່ຫາງກທານຕະຫລອດກ້ຽງ

ໃຫ້ສົມດ້ານດັ່ງໃຈ

ເຂົ້າໄປຢູ່ປ່າໄມ້
ເຂົາໃຫຍ່ວົງກົດ
ບໍາເພັນຕົນເປັນບັນພິດ
ກໍ່ບໍ່ມີຢຸດຢັ້ງ
ເພື່ອແລກຍານດວງແກ້ວ
ແນວວ່າບຸດຕີບຸດຕາຫລ້າ
ກໍ່ທ່ານສາ
ກ້ຽງອ່ອຍຫ່ອຍ
ນາງມັດທີນາດນ້ອຍ
ກໍ່ທານກ້ຽງໂລດບໍ່ຍັງ
ໃຈພຣະເຫວດຕໍ່ຕັ້ງ
ຍິ່ງໃຫຍ່ໃນທານ
ປາຣະມີເປັນພົນ
ຄັກຈິງຈະແຈ້ງ
ຈົນວ່າຊາວເມືອງໄຫວ້
ໃຫ້ຄືນເມືອຄອງຣາດ
ເນົາຢູ່ພາສາດກ້ວາງ
ສະບາຍບ້ານບັ່ງປອງ
ທົກກະສັດພີ່ນ້ອງ
ໄດ້ມາພົບປະສົບຕາ
ຄວາມລະອາອາຍອໍ່າ
ບໍ່ຄິດຫງໍາຫງາຍແຈ້ງ
ຄໍາແຄງໃຈເຄື່ອງແຄ້ນ
ກໍ່ຫາຍໄປແປບເປົາ
ເສນາເນົາບັ່ງນ້ອມ
ກໍ່ຫອມຫຸ້ມຣໍ່ກັນ
ເລື່ອງອະດີດທີ່ຜ່ານນັ້ນ
ຍົກຍື່ນຂໍອະໄພ
ໄພກໍຊົມເຊີຍສຽງ
ຊ່າລືດັ່ງກ້ອງ
ເສນານອງເນືອງລົ້ນ
ໃຈກຸສົນໄດ້ບີແບ່ງ
ສະຫນຸກແຕ່ພຣະເຫວດແຕ່ງ
ເບີກພຣະຄັງ ຄັ້ງນັ້ນປັນໃຫ້ສູ່ຄົນ
ແສນສະຫນຸກມາກລົ້ນ
ຄົນທີ່ຂາດອຶດຫິວ
ພູະອົງປີວເປື້ອງປັດ
ແຈກໄປເຫມີດກ້ຽງ
ຟັງສຽງຍໍມືນ້ອມ
ສາທຸການບໍ່ໄດ້ຂາດ
ອັນວ່າພາສາດກ້ວາງ
ງາມລະຫ້ອຍສ່ອງໃສ
ຄົນຢູ່ເຫນືອແລະໃຕ້
ໄຫລຫລັ່ງມາໂຮມ
ມາເພິ່ງບຸນສົມພານ
ພຣະພໍ່ເມືອງເປັນເຈົ້າ
ສາມັກຄີໂຮມເຕົ້າ
ເປັນກໍາລັງແຫນ້ນແກ່ນ
ແສນຮັກຫອມຣໍ່ຫຸ້ມ
ພຣະອົງເຈົ້າຄູ່ສູ່ຄົນ
ເອີ! ກຸານະດີເລີດລົ້ນ
ປະເສີດຍິ່ງຫຼືອຫລາຍ

ຫມາຍວ່າສັງຄົມເຮົາ
ຢ່າລືມໄລທາງເລື້ອງ
ເກີດມາໃນໂລກນີ້
ຂໍໂຈະໄວ້ທີ່ນັ້ນ
ຂໍສັງວອນພຽງ
ທ່ານຜູ້ມີຄວາມຮູ້
ໂຈະໄວ້ພຽງທີ່ນີ້ ໂອ້ຍ...
ເອີ້! ບັດນີ້ຊິຂໍໄລລາຮ້າງ
ໄປຄົນດຽວດອກເຈົ້າ
ທັງອາຈານຜູ້ນັ່ງກ້າ
ດ້ວຍພຣະຄຸນທີ່ສູງສັກ
ຂໍລາທັງຍາພໍ່ເກົ້າ
ສາມະເນນຂໍກ່າວຕ້ານ
ຂໍລາທັມມາດກວ້າງ
ຂໍລາອາຣາມຫລວງ
ຊອງພູພັນອັນເຄີຍຄ້ຽວ
ອົງພຣະພຸດທະຮູບເຈົ້າ
ລາທັງອາສະຫນາພ້ອມ
ລາທັງໂຕະຕັ່ງພ້ອມ
ລາທັງກອງແລະຄ້ອງ
ກີ່ຂັບໂອພຸນພີ້
ການເວລາມາເກີງ
ຢ່າໄດ້ມີຫມອງເສົ້າ
ອັນວ່າໂຣກພະຍາດຮ້າຍ
ອັນຫນີ່ງຊຸມຜຸ້ເກົ້າ
ບໍ່ວ່າຍິງຫລືຊາຍ
ຂໍໃຫ້ສົມພານເຈົ້າ

ຊິຢູ່ກັບໄປໄດ້
ທານະໄມອັນປະເສີດ
ອາໃສຊິ້ນເພິ່ງກັນ
ເລື້ອງພຣະເວດສັນດອນ
ສັງເຂບເອົາພຽງນີ້
ວິຈານເອົາກ້ອນກີ່
ສາແລ້ວກ່ອນລະໂຍມ ເອີ່ຍ
ໄປຕາມທາງເສັ້ນປ່ຽວໆ
ຕົວຂ້ອຍຊິສັ່ງລາ
ເປັນປະມຸກໃນປາງບຸນ
ໄດ້ຮັກຊຸມສິດເຄົາ
ພຣະເກຣາບຸເກຣະທຸກໆທ່ານ
ວ່າລາແລ້ວຄູ່ສູ່ອົງ
ບ່ອນເຄີບນັ່ງເທສະຫນາ
ຂວ້າງສະຫນາມທີ່ງານຢ້ອງ
ຢ່າອາແດງທີ່ເຄີຍສູບ
ທີ່ເຄີຍໄຫວ້ນ້ອມສັ່ງລາ
ທີ່ເຄີຍນັ່ງເທ ສະຫນາ
ຕຽງຕູ້ຜ້າຫົມນອນ
ທີ່ໂຍມເຈົ້າໄດ້ລັ່ນຕີ
ສັດທາແຜ່ແກມສົມພານ
ຊິສັ່ງລາພຽງນີ້
ໃຫ້ຫາຍເບົາບາງໂສກ
ຢ່າມາໄກບຽດບຽນ
ແລະນ້ອຍໃຫຍ່ທັງຫລາຍ
ກໍ່ດັ່ງດຽວໂດຍດ້າມ
ອານິສົງຢູ້ສົ່ງ

ລາບຍົດໄຊໂຊກພ້ອມ
ໃຫ້ຫອມຕຸ້ມແດ່ທຸກຄົນ
- ເອີ້! ໄດ້ເວລາດີແລ້ວ
ອັດສະດົງໄກ້ຊິຄ່ຳ
ຂໍສິ້ນສຸດເລື່ອງພຣະທັມ
ຊິລາລົງພຽງທໍ່ນີ້
ປີຫນ້າຈຶ່ງຄ່ອຍຟັງ
ສັດທາໂຍມ...ເອີຍໆ

( ຫມົດ )

## ກອນແຫລ່
## ລາທັມມາດອີກແບບຫນຶ່ງ

### ຊາຍດອນໃຕ້

- ບັດນີ້ພໍແຕ່ຈົບລົງແລ້ວ
ສັບດອນພຣະຍາເຫວດ
ເທດມາແຕ່ເຊົ້າ ໆ
ຂະໂຍມເຈົ້າໄດ້ນັ່ງຟັງ
ມີຈິດໃຈຕໍ່ຕັ້ງ
ນັ້ນຄັກແນ່ບໍ່ແປພັນ
ມາຮ່ວມກັບຫລາຍຄົນ
ຈົບອັ່ງອໍສາລາກ້ວາງ
ບໍ່ໄດ້ຄວງຄຸຍຫລີ້ນ
ສົນທະນາໄປທາງອື່ນ
ຟັງບ່ອນເລີກບ່ອນຕື້ນ
ໃນເລື່ອງຫນໍ່ພຸດໂທ
ມີຂັນໂອທຽນໄຕ້
ຈົບສາລາເຮືອງຮຸ່ງ
ດ້ວຍຈິດໃຈມາດມຸ້ງ
ໃນແກ້ວຫນ່ວຍພຣະທັມ
ຈິດໃຈຈໍາເອົາໄວ້
ແນວດີມີປະໂຫຍດ
ແນວເປັນໂທດລະກົ້ມ
ຢ່າຈໍາໄວ້ໃສ່ໃຈ
ເຊັ່ນຕາພານຂີ້ຮ້າຍ
ມີອາຍຸ 60 ປີ
ເລື່ອງຕັນທາພາໂລ
ໂລດບໍ່ຄືຊາວບ້ານ
ບຸນສົມພານບໍ່ເຄີຍສ້າງ
ມົວເມົາແຕ່ກິເລດ
ກາຍເປັນເຫດຊົ່ວຊ້າ
ມາເຂົ້າໃສ່ຕົນ
ໄດ້ເມຍນ້ອຍຫນີບໍ່ພົ້ນ
ໃນຮ່ວງອະກຸສົນ
ນາງອະມິດຕະຕາເປັນຄົນ
ໜຸ່ມສາວຄະນອງນ້ອຍ
16 ປີຍັງຈ້ອຍ ໆ
ນາງລໍາອອຍແຕ່ເກົ້າຊົ່ວ

| | |
|---|---|
| ຕາເລີຍມືດເລີຍມົວ | ບໍ່ຄືນຳເລື່ອງສ້າງບຸນໄວ້ໃສ່ຕົນ |
| ແຕ່ລະມື້ຊອກຄົ້ນ | ສ້າງກິເລດຕັນຫາ |
| ກາຍເປັນຄົນພາໂລ | ທ່ຽວຂໍໄທບ້ານ |
| ວຽກບໍ່ງານການບໍ່ສ້າງ | ວີກິທາງບໍ່ແຈ້ງສ່ອງ |
| ສຸດທ້າຍເຂົ້າສູ່ຫ້ອງ | ອະບາຍພຸ້ນວ່າແນ່ນອນ |
| ຂໍໃຫ້ຄິດກ່າວຍ້ອນ | ເອົາແຕ່ບ່ອນມັນຄັກ |
| ໃຫ້ປະຈັກໃນຫູ | ຄິດເບິ່ງເອົາເດີ້ເຈົ້າ |
| ໃຫ້ຄິດເອົາທາງເບື້ອງ | ອົງພຸດໂທພຣະຍາເທວດ |
| ການກຸສົນເປັນເຫດ | ສ້າງຄວາມດີທ້ອນໄວ້ໃຈກ້ວາງກວ່າທະເລ |
| - ນາງມັດທີນັ້ນເປັນທີ່ອາດເອ້ | ເປັນເລື່ອງເລົ່າຂອງສະຕຣີ |
| ມີຈັນຍາຂອງແມ່ຍິງ | ຄັກຈິງຈະແຈ້ງ |
| ຮັກແພງພົວຂວັນແກ້ວ | ທັງບຸດຕີບຸດຕາບໍ່ມີໄດ້ສູນເສື່ອມ |
| ປາຣະມີຈິ່ງງຳເຫລື້ອມ | ອານິສົງສົ່ງໃຫ້ |
| | ບຸນກວ້າງຕໍ່ມາ |
| ໃພກໍ່ຮັກຮໍ່ຫນ້າ | ຈາຣອດຄະນຶງເກິງ |
| ເບິ່ງບ່ອນໃດສວຍງາມ | ຢູ່ທຸກຍາມບໍ່ມີເອື້ອນ |
| ຄຳປາກເໝືອນສັງກາແກ້ວ | ແນວໃດຫວານອ່ອນໆ |
| ຈັ່ງເປັນຕາອອນຊອນ | ແມ່ມັດທີຢາດແຕ່ຟ້າ |
| | ລົງໃຕ້ມະນຸດຄົນ |
| ອັນຫນຶ່ງອີກໃຫ້ຄົ້ນ | ໃນເລື່ອງຂອງບຸດຕີ |
| ທັງບຸດຕາ | ພໍ່ກັບສອງນ້ອຍ |
| ຄືວ່າທ້າວຊາລີ | ນາງກັນຫາສຽງຈ້ອຍ ໆ |
| | ຄຳຫວານ ໆ ຟັງພໍ່ |
| ສັງມາດີກະດໍ້ | ບດແກ້ວຫນໍ່ພຣະອົງ |
| ກະຕັນຍູທັງກະຕະເວທີນັ້ນ | ສິ່ງພົນຕໍ່ພໍ່ແມ່ທັງສອງ |
| ໄປຕາມຄອງບິດາ | ສັ່ງສອນເອົາໄວ້ |
| ບໍ່ໄດ້ກຽງຄວາມເວົ້າ | ເລວຊາມທາງຊົ່ວ |

ເຈົ້າອີ່ພໍ່ທູນຫົວ
ເອີ້ ! ພໍ່ແຕ່ສິນຄວນແລ້ວ
ຊິໄດ້ພາກພີ່ນ້ອງ
ດ້ວຍບຸນທີ່ເລີດລົ້ນ
ນຳພາການທຳບຸນ
ດ້ວຍພຣະປາຣະມີກັ້ງ
ເປັນດັ່ງໂພແຜ່ກວ້າງ
ຂໍໃຫ້ທ່ານປ່ຽມລົ້ນ
ດ້ວຍຜົນບຸນທີ່ທຳມາ
ລາກ່ອນເດີ້ສຽງຄ້ອງ
ລາທັງຫມ້ຽງພູພັນ

ລາຂັນໂທທັງກ້ວຍ
ລາທັງດວງປະທີບໄຕ້
ຂໍລາໄປທາງກົ້າ
ລາຫມາກເຂືອຫມາກແຄ້ງ
ລາທັງອາພອນຜ້າ
ລາເຂົ້າຫນົມເຂົ້າຕົ້ມ
ລາພາພານພາເຂົ້າ
ຂໍໃຫ້ໃສ່ສ່ອງແຈ້ງ
ກຸຕິຍາວກຸຕິນ້ອຍ
ອົ່ງພຸດໂທຮູບພຣະເຈົ້າ
ເອີ້ ! ກ່ອນຊິລາຈາກນັ້ນ
ພົງທຸລີມົວຫມອງ
ສັງມາເຫລືອແຮງຂ້າ
ຄັນສັດທາໂຍມແມ່

ສັງມາດີກະດົ້ບຸນເຈົ້າພໍ່ພຣະອົງ
ຊິຂໍໄລລາຈາກ
ຂະໂຍມເຈົ້າຄູ່ສູ່ຄົນ
ອາຈານໃຫຍ່ອົງປະທານ
ຢູ່ໃນວັນນີ້
ເປືອງນອງຊ້ອຍຊື່ນ
ປວງຂ້າໄດ້ເພິ່ງເງົາ
ເຕັມແຕ່ການກຸສົນ
ໃຫ້ຊ່ວຍຊູປົກປ້ອງ
ສຽງກອງດັ່ງສະນັ່ນ
ລາທັງອຸແອ່ງນ້ຳ
ກະບວຍຊ້ຳພອງໂອ
ລາທັງຊວຍໃສ່ເງິນກີບ
ໄຟແຈ້ງສ່ອງໃສ
ຫມອນປັກຄຳແລະສາດເສື່ອ
ທີ່ເຄີຍແກ້ມປິ່ນປາ
ແພວາທີ່ໄດ້ຫົ່ມ
ຂອງສົ້ມແລະເຄື່ອງຫວານ
ສາລາງານສີສະງ່າ
ຄືດ້ານດັ່ງດາວ
ລາທັງສິນໃສ່ຍອດໂງ່
ຢ່ານີເສົ້າເກົ້າສີ
ຂໍລ້າງຊ່ວຍຜັດສີ
ສູ່ອັນໃຫ້ໃສແຈ້ງ
ອາດຕະນາຜູ້ເຫດແຫລ່
ບໍ່ຊ່ວຍລ້າງແທ້ໆ
ຊິໄປກ້ຽງບ່ອນຈັ່ງໃດ

ເງິນບາດໄທບໍ່ເຄີຍເວົ້າ ເງິນກີບລາວບໍ່ເຄີຍວ່າ
ເງິນດອນລ່າກໍ່ໄດ້ ໂອ່ຍພໍ່ໃຫ້ຄ່າຟອຍ
ໄຍແມງມູມຢາດຍ້ອຍ ຫຍາບຢ່າງເປັນຍວງໄຍ
ຜັດທາງໃນມັນສີດຳ ກ່ຳມົວໃຫ້ມັນແຈ້ງ
ແຍງເງົາໄດ້ ໃສດີພໍປານແວ່ນ
ຍາດຊິບໍ່ຍາກແຄ້ນ ດຳຄືຫມຶ້ກະແມ່ນໃສ
ອັນນີ້ລ້າງບອກໃຫ້ ສົດຊື່ນມີຊີວິດ
ລ້າງທາງໃນແນວຄິດ ບໍ່ງ່າຍດາຍຄືເວົ້າ
ເຮົາຕ້ອງເອົາພຣະທັມລ້າງ ຫົວໃຈທີ່ຫມອງຫມົ່ນ
ລ້າງພວກອະກຸສົນ ໃຫ້ຈິດໃຈແຈ່ມແຈ້ງ
ມີບຸນຄ້ຳຊ່ວຍຊູ ເອົາແລ້ວບໍພໍ່ຕູ້ແມ່ຕູ້
ຊິຂໍອວຍພອນໄຊ ອາຍຸຍືນຍາວໄກ
100 ວັດສາກຽນຫມັ້ນ

ພຣະຈັນເພັງພຽງດ້າມ ກາຍຍາພຸດຜ່ອງ
ອັນວ່າໂຣກພະຍາດຮ້າຍ ຢ່າໄດ້ມາກີກຕ້ອງ
ຕົວເຈົ້າໃຫ້ຫລີກໄກ

ພະລະຂໍໃຫ້ໄດ້ ສະເຫບີດັງພາຍສານ
ບຸນສົມພານເພັງແສງ ແດ່ທຸກຄົນຢ່າຫມອງເສົ້າ
ຄັ່ນເຮັດບາໃຫ້ລວຍເຂົ້າ ທັງຂາຍຂອງທຸກສິ່ງຢ່າງ
ໃຫ້ມີຄົນຊ່ວຍຊື້ ສົມເຈົ້າປາດຖະຫນາ
ຊິຂໍລາພຽງນີ້ ປີຫນ້າມາພໍ້ກັນໃຫມ່
ທັງຄວາມເຈັບເຈົ້າຢ່າໄດ້ ທັງຄວາມໄຂ້ເຈົ້າຢ່າມີ
ນັ້ນລະນາ.... ສັດທາໂຍມເອີ່ຍ..ໆ

(ຫມົດ)

# ແຫລ່ໂມທະນາທານ

## ຊາຍດອນໃຕ້

- ບັດນີ້ ພໍແຕ່ຈົບລົງແລ້ວ ການທຳບຸນຕັກບາດ
ຊຸມໝູ່ຍາດພີ່ນ້ອງ ວັນນີ້ກໍຊື່ນໃຈ
ເຈົ້າສັດທາເພີ່ນໄດ້ ມີຄວາມເຊື່ອເປັນຫລັກ
ຕັ້ງສັດຈະລົງຄັກ ບໍ່ປ່ຽນແປພັນປີ້ນ
ການກິນທານມີໃຈຊ້ອຍ ບໍ່ເຫັງງທາງອຍອຸກອັ່ງ
ຫົວໃຈເຈົ້າຄືດັ່ງ ນໍ້າໂອສົດທິບແກ້ວ
ປັ້ນແວວເຫລື້ອມສ່ອງໃສ

ຫວັງເພື່ອເອົາໃຫ້ໄດ້ ດວງປະເສີດການກຸສົນ
ໄດ້ລົງທຶນລົງຮອນ ບໍ່ຮອນລືນເຈົ້າ
ເອົາປັນຍາເປັນດວງແກ້ວ ເກີດໃນໃຈພຸດພ້ອງ
ຂອງຊຸມຍາດພີ່ນ້ອງ ບຸນເຈົ້າໄດ້ແຕ່ງມາ
ທັງພົບນີ້ພົບໜ້າ ກໍຫາກວ່າໃຫ້ສົມໝາຍ
ຍາດຕິທັມມາໂຮມ ໄດ້ຮ່ວມໂມທະນານ້ອມ
ຄວາມຮັກຫອມບໍ່ເຫີຍໄດ້ ອະມະຕະຄັກແນ່
ຄິດເອົາເດີ້ໂຍມແມ່ ຕັ້ງແຕ່ຄາວກ່ອນກີ້
ພຣະອົງໃຊ້ຊາດມາ ເລື່ອງພຣະເຫວດແຫລ່ງຫລ້າ
ຊາດສຸດທ້າຍທີ່ສິບ ລ້ວນແຕ່ພົນຂອງທານ
ໄດ້ຫນໍ່ໂພທິຍານແກ້ວ

ມີແຕ່ແວ່ວວ່າວເຫລື້ອມ ດ້ວຍພົນທານຍູ້ສົ່ງ
ຈຸດປະສົງຍອດແກ້ວ ກໍສົມແລ້ວດັ່ງໝາຍ
ຕັ້ງແຕ່ຊຸມອານາດກ່າວຮ້າຍ ສັບຊໍ່ແນວບໍ່ດີ
ພຣະບິດາຂັບໜີ ຕິວ່າຄົນບໍ່ດີໄດ້ແຕ່ງ
ທານປາງນັ້ນ

ພຣະອົງທານຍັງຊ້າງ ນາເຄນຕົວປະເສີດ

ໃຫ້ຊາວເມືອງກະລຶງກະລາດ

ຄວາມທຸກຍາກນາກລົ້ນ
ເພີ່ນບໍ່ເຄີຍເບົາບົກ
ເດີນຕາມທາງທານມ້າ
ທານຮອດສອງບຸດຕາ

ບາດວ່າຕົກຮອດຄັ້ງ
ພຣະເຫວດເອົາຕົນກັບ
ສະຫນຸກທານສະຫນຸກສ້າງ
ບຸນພະຫລາເພີ່ນຫລາຍ

ຈັ່ງວ່າໃນນີ້ນີ້
ເຈົ້າສັດທາເປັນຫລັກ
ມາແຕ່ເຫນືອຫລືໃຕ້
ລວມຈິດໃຈແກ່ນກ້າ
ການກວາຍທານບອກແຈ້ງ
ບໍ່ລືວານປັດຈັຍ
ຈຶ່ງຂໍໂມທະນານ້ອມ
ຂໍໃຫ້ບຸນພາຍແຜ່
ໃຫ້ຍືນຫມັ້ນ
ຈັ່ງວ່າແລ້ວບັດນີ້
ໃຫ້ແກ່ສັດທາໂຍມ
ເປັນສະພານຮາວຂຶ້ນ
ທຸກຢ່າງມີອະເນກລົ້ນ
ຢູ່ໃນໂລກແຫລ່ງຫລ້າ
ຢ່າໄດ້ມີຝູງມານ

ເພາະຄວາມໄຮ້
ເກີດປະຈົບ
ແຕ້ງຕ່ຽວອຶດຫິວ
ຝ່າຍທານພໍ່ຫນ້ອຍ
ອາຊະໄນແລະລົດຂີ່
ແມ່ນມະທີກໍ່ທອດໃຫ້
ທານກ້ຽງແມ່ນບໍ່ຍັງ
ພົນເກີດອານິສົງ
ນັ່ງປອງເມືອງບ້ານ
ເງິນຄຳແຈກຈ່າຍ
ບໍ່ມີທຸກຍາກໄຮ້
ໃພກໍ່ຍ້ອງຊ່າລື
ສາທຸຮ່ວມໂມທະນາ
ຕະຫລອດວົງສາເຊື້ອ
ທາງໄກໄດ້ມາຮ່ວມ
ພະລັງແຫນັ້ນແກ່ນແຂງ
ບິນດະບາດພັດຕາທານ
ສູ່ປະການມີພ້ອມ
ນຳສັດທາທີ່ກ້າແກ່
ສັດທາໂຍມພີ່ນ້ອງ
ຄູ່ສູດຄືນສັດທາໂຍມເອີ່ຍ !
ຊີຂໍເລົ່າແກມພອນ
ຄູ່ສູດຄືນຈະເລີນກ້າວ
ເມືອສະຫວັນວິມານເມກ
ບໍ່ເຄືອງຮ້ອນຮ່ອນໃດ
ພົນແຜ່ນພິພົບ
ຫມູ່ມວນແນວຮ້າຍ

ຈົ່ງຜ່ານກາຍລຸ່ມເຈົ້າ    ໃຫ້ເບົາບາງຫາຍໂສກ
ກັບທັງໂຣກພະຍາດຮ້າຍ    ຢ່າມາໄກ້ບຽດບຽນ
ທຸກສິ່ງຢ່າງໃຫ້ພ້ຽນ    ຜຸດຜ່ອງສົດໃສ
ອັນວ່າໂພຍໄພຫຍັງ    ຢ່າຊິເວີນມາຕ້ອງ
ຂໍໃຫ້ຮອງ ໆ ເຫລື້ອມ    ຄືຄຳລ້ຳຄ່າ
ຄືເພັດນິນຈິນດາ    ສັດທາເຈົ້າພີ່ນ້ອງ
ໃຫ້ສົມດ້ວມດັ່ງຫວັງ

ແມ່ນວ່າເຈົ້າກໍ່ສ້າງ    ໃນຫນ້າທີ່ການງານ
ວຽກທາງການຂອງລັດ    ແລະວຽກເຮືອນການຢ້າວ
ໃຫ້ແວວວາວໃສເຫລື້ອມ    ກຽດຕິຄຸນໃນຫນ້າທີ່
ຜູ້ຂາຍພັກຫມີ່    ຂາຍຫມາກແຕງຫມາກເຕົ້າ
ທັງຂາຍເຂົ້າແລະເຄື່ອງຂອງ

ຜູ້ຂາຍກອງແລະຄ້ອງ    ໃຫ້ສຽງດັ່ງເຈົ້າຍ່ອງໆ
ມີແຕ່ຄົນຍົກຍ້ອງ    ຍໍໄວ້ວ່າດີ
ຂາຍເງິນຄຳທຸກມື້ນີ້    ທຸກສິ່ງຢ່າງໃຫ້ສົມໃຈ
ໃຫ້ມີເງິນມີຄຳ    ສ້າງແປງເຮືອນຢ້າວ
ເກີງຍາມຄາວບຸນແລ້ວ    ສະຫນຸກໃຈເຈົ້າເລືອກແຕ່ງ
ບຸນພະຫລາເຈົ້າແຮງ    ເຮັດອັນໃດກໍ່ໃຫ້ໄດ້
ດີຂຶ້ນເພີ່ມທະວີ

ມີເງິນຄຳມາກລົ້ນ    ສຸຂະພາບສົມບູນດີ
ອານິສົງພົບຫາ    ໃຫ້ຊ່ວຍຢູ້ ຫນູນຢູ້
ໝົດສູ່ຄົນ ບຸນຄ້ຳ    ຢ່າມີກ່າວເວນລືວ
ຂໍໃຫ້ທຸກທົ່ວຫນ້າ    ມີບຸນຄ້ຳແມ່ນຊ່ວຍຊູ
ສັດທາໂຍມ...ເອີຍ !!

ຫມົດ

# ແຫລ່ງຄຸນພຣະທາດຫລວງ

ຊາຍດອນໃຕ້

- ບັດນີ້ ຈັກໄດ້ພັນລະນາເລື້ອງ　ປະເພນີປະຈຳຊາດ
ບໍ່ໄດ້ຂາດແບບເນື້ອງ　ຄອງເຄົ້າແຕ່ປະກົມ
ໃຜກໍ່ມາກາບກົ້ມ　ພຣະທາດໃຫຍ່ເຈດີ
ໂລກາຈຸລະມະນີ　ຊາລືດັ່ງກ້ອງ
ຄົນທັງຜອງພາກັນເອີ້ນ　ວ່າທາດຫລວງນັ້ນແມ່ນໃຫຍ່
ໃຫຍ່ກໍ່ແທ້ໆ　ຄົນລາວສ້າງຕັ້ງແຕ່ເດີມ
ຮຽມບໍ່ໄດ້ເວົ້າເພີ້ມ　ຍອດສະຫງ່າງນະພາບິນ
ເມກໄຫລວົນວຽນຈອມ　ເມືອມອງຈົບຄໍຕັ້ງ
ພະລັງແຫ່ງສັດທາສ້າງ　ປາງເສດຖາຄອງລາດ
ປະຊາຊາດພີ່ນ້ອງ　ມາໂຮມເຕົ້າຊ່ວຍແຮງ
ປະຫວັດສາດບອກແຈ້ງ　ອົງໃຫຍ່ພຣະເຈດີ
ພ້ອມພຣະອົງກໍ່ຍັງມີ　ທາດນ້ອຍລອມລຽນລ້ອມ
ບັນຈຸຄຳສອນຊີ້　ຂອງອົງພຸດທະບາດ
ປາຣະມີສາມສິບທັດປະກາດກ້ອງ　ບັນຈຸໄວ້ໃສ່ແຜ່ນຄຳ
ແຕ່ລະອົງນັ້ນແລ້ວເຈົ້າ　ລວມຢູ່ມີ 30
ປຽບດັ່ງຄຳສາວົກ　ສາດສະດາອົງລ້ຳ
ທີ່ເປັນຄືສອນຊີ້　ມູນມັງອັນປະເສີດ
ໃຜຫາກໄປຄົ້ນຄ້ວາ　ຊິເຫັນແກ້ວຫນ່ວຍພຣະທັມ
ທຸກ ໆ ປີໄດ້ກໍ່ສ້າງ　ບຸນໃຫຍ່ງານສະຫລອງ
ຕັ້ງເປັນສູນລວມໃຈ　ຊາດປະຊາທັງຄ້າຍ
ໃຜກໍ່ພາກັນໄຫວ້　ລະນຶກໃນພຣະຄຸນທ່ານ
ຈັ່ງວ່າມາທ່ຽວງານ　ບຸນທາດຫລວງແທ້ ໆ
ຈຶ່ງເຫັນນັ້ນບ່ອນຈິງ

ພຣະທາດຫລວງໄດ້ບອກຊີ້　ລັກສະນະຄວາມສັກສິດ

ເດັ່ນຊັດໃນການທຳ　　ນາຍຊ່າງລາວຕະກູນເຄົ້າ
ປະຕິມາກຳເປັນເຈົ້າ　　ສິນລະປະອັນປານີດແມ່ເອີຍ.
ລັກສະນະເອກອ້າງ　　ຕະກຸນສ້າງແມ່ນແຕ່ລາວ
ສິນລະທັມນັ້ນແມ່ນກ້າວ　　ປະເດັນໃຫຍ່ສຳຄັນ
ປຣັດຊະຍາຂອງພຸດ　　ສ່ວນປະສົມຕະກຸນເຄົ້າ
ດອກບົວບານໄດ້ໂຮມເຕົ້າ　　ສາມັກຄີທຸກກໍກີບ
ເປັນກາບຊ້ອນ　　ປະສິງຊີ້ສັ່ງສອນ
ໃຫ້ຄົນລາວກ່ອມກ້ຽວ　　ນ້ອມຫນ່ຽວເປັນໃຈດຽວ
ສາມັກຄີມີສິນທັມ　　ຕໍ່ກັນເອົາໄວ້
ລາວແຕ່ເຫນືອເກິງໃຕ້　　ໃຫ້ໂຮມກັນຢ່າປີແບ່ງ
ສາມັກຄີເປັນຕຸ້ມເຕົ້າ　　ໃຫ້ຄືເພິ້ງປ່ຽງດຽວ
ແຫ້ລະນາ...　　ສັດທາໂຍມເອີຍ...
ເອີ້ ! ອັນຫນຶ່ງເພື່ອເອກອ້າງ　　ເຮົາມາຮ່ວມສະຫລອງໄຊ
ສະຫລອງຄວາມສຳເລັດ　　ການກໍ່ເຈດີນີ້
ເປັນພິທີມູນເຄົ້າ　　ມີມາຕັ້ງແຕ່ເກົ່າ
ບໍ່ໄດ້ປະລະກົ້ມ　　ຈັກປີແທ້ວ່າແນ່ນອນ
ທຸກພາກສ່ວນເປັນກຸ່ມກ້ອນ　　ໄດ້ຕົບແຕ່ງປະດັບດີ
ດ້ວຍດອກດວງສີສັນ　　ເສບລະງຶມດັງກ້ອງ
ມີເຄື່ອງຂອງຂາຍຄ້າ　　ຫລາຍແນວນັບບໍ່ໄຂວ່
ສີລະປະວາດຟ້ອນ　　ຫມໍລຳຍ້ອນເຂົ້າໃສ່ແຄນ
ຄົນທີ່ມາແຕ່ລະແຄວ້ນ　　ຄັບຄັ່ງໂຮມສະຫນາມ
ເກິງເມືອຍາມພໍແລງ　　ເສື່ອມສູນແສງຟ້າ
ອັນວ່າໄຟນີອອນແຈ້ງ　　ແສງສີກໍ່ໃສຮຸ່ງ
ມີພຣະສັງຄະເຈົ້າ　　ໂຮມເຕົ້າເທດສະຫນາ
ອັນນີ້ແລ້ວລະເຈົ້າ　　ຄຸນປະເສີດມະຫາສານ
ໂລກຊາລືສຽງດັງ　　ໄປທົ່ວງານຂານຍ້ອງ
ຂໍໃຫ້ສຸຂີຫມັ້ນ　　ສັດທາໂຍມທຸກ ໆ ທ່ານ

ທັງໄດ້ທານທອດດ້ວຍ ປັດຈັຍສ້າງແຕ່ງບຸນ
ເພື່ອເພີ້ມພູນຄູນສ້າງ ອີງເຈດີໃຫ້ລືເດັ່ນ
ເປັນແວ່ນແຍງຕໍ່ໜ້າ ພາຍລ້ອຍແມ່ນຕໍ່ໄປ
ສັດທາໂຍມ... ເອີ່ຍ... ຈົບບໍຣະບວນຄວນເທົ່ານີ້ກ່ອນແລ

# ຄຳຂອບໃຈ

ປື້ມນ້ອຍຫົວນີ້ ໄດ້ຮັບການຈັດພິມກໍ່ຍ້ອນແຮງຊຸກຍູ້ຈາກຄູບາອາຈານ.ພໍ່ແມ່ປ້າສຸງ. ໝູ່ເພື່ອນ ແລະ ນັກສຶກສາສົງ ຈຳນວນນຶ່ງ ທັງທາງດ້ານແຮງໃຈ ແລະ ແຮງຊັບ

ເນື່ອງໃນໂອກາດນີ້ ຂະນ້ອຍຂໍສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນຢ່າງຍິ່ງໂດຍສະເພາະ

1. ຄະນະຊີ້ນຳກວດກາທັງໃຫ້ຂໍ້ມູນ

1.1 ພຣະອາຈານໃຫຍ່ມະຫາ ບົວຄຳ ສາຣີບຸດ ຜູ້ອຳນວຍການວິທະຍາໄລສົງອົງຕື້

1.2 ພຣະອາຈານມະຫາ ເຫວດ ມະເສໄນ ຮອງ ຜ.ອຝ່າຍກິດຈະການັກສຶກສາວິທະຍາໄລສົງອົງຕື້

1.3 ພຣະອາຈານ ໄກສອນ ອິນທິຈັກ ຫົວໜ້າຫ້ອງການວິຊາການວິທະຍາໄລສົງອົງຕື້

1.4 ທ່ານອາຈານ ກະວິນ ຫົວໜ້າກົມພິມຈຳໜ່າຍກະຊວງກະແຫຼງຂ່າວ ແລະ ວັດທະນະທັມ

1.5 ທ່ານອາຈານ ຈັນທອນ ເທບຄຳວົງ ຮອງ ຜ.ອຝ່າຍວິຊາການວິທະຍາໄລສົງອົງຕື້

1.6 ທ່ານອາຈານ ສົມເພັດ ຈິດທິວົງ ຮອງ ຜ. ອ ຝ່າຍບໍລິຫານວິທະຍາໄລສົງອົງຕື້

1.7 ທ່ານອາຈານ ອ່ອນສີ ປະຊາວົງ ພະນັກງານວິຊາການກົມວັດທະນະທຳມະຫາຊົນກະຊວງກະແຫຼງຂ່າວ ແລະ ວັດທະນະທຳ

2. ຜູ້ຈັດທຳ ແລະ ຄອມພິວເຕີ

- ອາຈານບາງ ຣັດຕະນະພອນ ບານຸວົງສ ຫົວໜ້າສູນຄອມພິວເຕີ້ ວິທະຍາໄລສົງອົງຕື້

3. ຜູ້ໃຫ້ທຶນສະໜັບສະໜູນ

3.1 ພຣະອາຈານ ສົມໄຊ ໄຊຍະວົງ ( ຄູບາກີ ) ວັດຊຸບຕາວະຣາຮາມ

3.2 ພຣະອາຈານ ພູມີ ພອນທະລາສີນ ວັດມີໄຊ

3.3 ບັນດານິສິດນັກສຶກສາສົງປີ I ຄຣຸສາດ, ປີ II ອັກສອນສາດ ແລະ ຜູ້ອື່ນໆດັ່ງມີລາຍຊື່ຢູ່ເບື້ອງຫຼັງນີ້.

ຂໍອວຍພອນແດ່ທ່ານຈົ່ງປະສົບແຕ່ຄວາມສຸກກາຍ ສະບາຍໃຈ ມີຄວາມສໍາເລັດໃນໜ້າທີ່ວຽກງານ. ສິ່ງໃດເລີດ ພອນໃດທີ່ປະເສີດຈົ່ງເກີດມີແດ່ທ່ານດ້ວຍເທີ້ນ.

ອາຍຸ ວັນໂນ ສຸຂັງ ພະລັງ

ວິທະຍາໄລສົງອົງຕື້ ວຽງຈັນ.

# ລາຍນາມຜູ້ ອຸບປະກັມການຈັດພິມປຶ້ມ

1. ພຣະ ອາຈານ ເວດມະເສໃນ. ວັດສີສະເກດ = 200.000 ກີບ
2. ພຣະ ອາຈານ ສຸບິນສຸດຊາດາວົງ ວັດໜອງບົວທອງເໜືອ = 100.000 ກີບ
3. ພຣະ ອາຈານ ບົວສີງ ສີສຸບັນ ວັດປ່າໜອງບົວທອງໃຕ້ = 300.000 ກີບ
4. ພຣະ ອາຈານ ສົມພອນ ສີລິສະວັດ ວັດຊຽງແວ່ = 100.000 ກີບ
5. ພຣະ ອາຈານ ພູມີ ພອນທະລາສິນ ວັດມີໄຊ = 500 ບາດ
6. ພຣະ ອາຈານ ບົວແກ້ວ ແສງສຸລິຍາ ວັດທາຍໂສກ = 100.000 ກີບ
7. ພຣະ ອາຈານ ວັນວໍລະເດດ ວັດທົ່ງສ້າງນາງ = 100.000 ກີບ
8. ພຣະ ອາຈານ ບຸນຍັງ ພິມມະໂຄດ. ວັດໜອງດ້ວງ = 500.000 ກີບ
9. ພຣະ ອາຈານ ສີຈັນ ສຸກຈະເລີນ. ວັດບ້ານຝາຍ = 50.000 ກີບ
10. ພຣະ ອາຈານ ທອງຂຽນ ໄຊຍະສີງ ວັດຄຳຮຸ່ງ = 500 ບາດ
11. ພຣະ ອາຈານ ໄກສອນ ອິນທິຈັກ ວັດອົງຕື້ = 10.000 ກີບ
12. ພຣະ ອາຈານ ບຸນເພັງ ພົມວິທັດ ວັດຂົວຫຼວງ = 50.000 ກີບ
13. ພຣະ ອາຈານ ຄຳໃໝ່ ຂັນສີລາ ວັດມີໄຊ = 90.000 ກີບ
14. ພຣະ ອາຈານ ຂັນຕີ ວັດສີສະເກດ = 70.000 ກີບ
15. ພຣະ ອາຈານ ດາວສະເດັດ ວັດຍາພະ = 50.000 ກີບ
16. ພຣະ ອາຈານ ທອງສະວັດ ວັດບ້ານຝາຍ = 100.000 ກີບ
17. ພຣະ ປ້ານແສນບຸດຕະລາດ ວັດໂພນສະຫວັນ = 50.000 ກີບ
18. ພຣະ ອາຈານ ສົມໄຊໄຊຍະວົງ ( ຄູບາກີ ) ວັດຂຸນຕາ = 700.000 ກີບ
19. ພຣະ ນັກສຶກສາສົງປີ I ຄຸຣສາດ = 37.000 ກີບ
20. ພຣະ ອາຈານ ບຸນເນືອງ ພິລັກໄຊຕິທອນ ວັດວຽງຈະເລີນ = 150.000 ກີບ
21. ພຣະ ອາຈານ ບຸນກອງນ້ອຍແດນພູ້ໄທ ວັດອິນແປງ = 200.000 ກີບ
22. ນາງ ພາດີ ນໍລະສີງ ບ້ານວັດໄຕນ້ອຍ = 200.000 ກີບ
23. ທ້າວວົງໄຊ+ນ. ດວງໃຈ. ຮ້ານ ເຝີໂພນພະເນົາ = 50 ໂດລາ
24. ແມ່ຕູ້ບົວສີ ເທບລັງສີ. ບ້ານ ຂຸນຕາທົ່ງ = 1.000 ບາດ
25. ທ້າວ ເກດສະໜາ + ນາງພູວັນ. ບ້ານປາກທ້າງ = 100.000 ກີບ
26. ທ້າວ ບຸນປອນ + ນາງ ສົງ ບ້ານພັກທະວີສຸກວັງວຽງ = 50.000 ກີບ

27. ແມ່ບົວເຮີນ ພູມມະສັກ ບ້ານສາຍລົມ = 300.000 ກີບ

28. ນາງວຽງທິບ ປະດັບຍົນ = 100.000 ກີບ

29. ພຣະ ບຸນເຮືອງ ພິມພິສານ ວັດຊຽງຍືນ = 30.000 ກີບ

30. ພຣະອາຈານ ມະຫາສຸບັນ ວັດຮ່ອງໄກ່ແກ້ວ = 200.000 ກີບ

31. ພຣະອາຈານບຸນສີ ວັດຂຸນຕາ = 50.000 ກີບ

32. ນັກສຶກສາ ປີ II ຄະນະອັກສອນສາດ = 60.000 ກີບ

33. ພຣະອາຈານ ພອນ ວັດສີໄຄ = 200 ບາດ


ພຣະອາຈານ ບຸນເນືອງພິລັກ ໂຊຕິທອນ
ວັດວຽງຈະເລີນ


ພຣະອາຈານ ພູມີພອນຫລາສີນ


ພຣະອາຈານ ບົວສີງ ສີສຸບັນ


ແມ່ບົວເຮີນ ພູມມະສັກ
ບ້ານສາຍລົມ



